ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄູ່ມື

## ເພື່ອການຈັດຕັ້ງປະຕິບັດ ການປະກັນຄຸນນະພາບ ສະຖານການສຶກສາຊັ້ນສູງ

# Guideline for Implementation of Quality Assurance in HEIs

ກະຊວງສຶກສາທິການ ແລະ ກິລາ

2016

# ຄູ່ມື

## ເພື່ອການຈັດຕັ້ງປະຕິບັດ
## ການປະກັນຄຸນນະພາບ
## ສະຖານການສຶກສາຊັ້ນສູງ

# Guideline
## for Implementation of
## Quality Assurance in HEIs

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************************

ກະຊວງສຶກສາທິການ ແລະ ກິລາ

ເລກທີ 6758/ສສກ.ສປຄ.14

ນະຄອນຫຼວງວຽງຈັນ, ວັນທີ 30 DEC 2014

## ຂໍ້ຕົກລົງຂອງລັດຖະມົນຕີ

### ວ່າດ້ວຍການອະນຸມັດນຳໃຊ້ ປື້ມຄູ່ມືການປະກັນຄຸນນະພາບສະຖາບັນການສຶກສາຊັ້ນສູງ

ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011

ອີງຕາມ: ຂໍ້ຕົກລົງຂອງທ່ານ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການອະນຸມັດນາໃຊ້ມາດຕະຖານຄຸນນະພາບການສຶກສາຊັ້ນສູງ ສະບັບເລກທີ 2608/ສສກ.ສປຄ.13.

ອີງຕາມ: ການສະເໜີຂອງສູນປະກັນຄຸນນະພາບການສຶກສາ.

**ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

**ມາດຕາ 1:** ອະນຸມັດນຳໃຊ້ ປື້ມຄູ່ມືການປະກັນຄຸນນະພາບສະຖາບັນການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.

**ມາດຕາ 2:** ມອບໃຫ້ສູນປະກັນຄຸນນະພາບການສຶກສາ ແລະ ກົມການສຶກສາຊັ້ນສູງ ຊີ້ນຳໃນການຈັດຕັ້ງປະຕິບັດຕາມປື້ມຄູ່ມືການປະກັນຄຸນນະພາບສະຖາບັນການສຶກສາຊັ້ນສູງ.

**ມາດຕາ 3:** ມອບໃຫ້ບັນດາ, ວິທະຍາໄລທີ່ສອນລະດັບຊັ້ນສູງຂຶ້ນໄປ ແລະ ມະຫາວິທະຍາໄລ ທີ່ຂຶ້ນກັບ ກະຊວງສຶກສາທິການ ແລະ ກິລາ ແລະ ຂຶ້ນກັບກະຊວງອ້ອມຂ້າງຈັດຕັ້ງປະຕິບັດຕາມ ປື້ມຄູ່ມື ເພື່ອໃຫ້ມີປະສິດທິຜົນ ແລະ ມີຄຸນນະພາບສູງສຸດ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ຮສ.ດຣ.ກອງສີ ແສງມະນີ

ບ່ອນສົ່ງ:

| | | |
|---|---|---|
| 1. | ຫ້ອງການກະຊວງສຶກສາທິການ ແລະ ກິລາ | 1 ສະບັບ |
| 2. | ກົມກ່ຽວຂ້ອງ ກົມລະ | 1 ສະບັບ |
| 3. | ເກັບມ້ຽນ | 2 ສະບັບ |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

************************

ກະຊວງສຶກສາທິການ ແລະ ກິລາ

ເລກທີ 6758 /ສສກ.ສປຄ.14

ນະຄອນຫຼວງວຽງຈັນ, ວັນທີ 30 DEC 2014

## ຂໍ້ຕົກລົງຂອງລັດຖະມົນຕີ

### ວ່າດ້ວຍການອະນຸມັດນຳໃຊ້ ປຶ້ມຄູ່ມືການປະກັນຄຸນນະພາບສະຖາບັນການສຶກສາຊັ້ນສູງ

ອີງຕາມ: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011

ອີງຕາມ: ຂໍ້ຕົກລົງຂອງທ່ານ ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການອະນຸມັດນາໃຊ້ມາດຕະຖານຄຸນນະພາບການສຶກສາຊັ້ນສູງ ສະບັບເລກທີ 2608/ສສກ.ສປຄ.13.

ອີງຕາມ: ການສະເໜີຂອງສູນປະກັນຄຸນນະພາບການສຶກສາ.

### ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ຕົກລົງ:

**ມາດຕາ 1:** ອະນຸມັດນຳໃຊ້ ປຶ້ມຄູ່ມືການປະກັນຄຸນນະພາບສະຖາບັນການສຶກສາຊັ້ນສູງ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.

**ມາດຕາ 2:** ມອບໃຫ້ສູນປະກັນຄຸນນະພາບການສຶກສາ ແລະ ກົມການສຶກສາຊັ້ນສູງ ຊີ້ນຳໃນການຈັດຕັ້ງປະຕິບັດຕາມປຶ້ມຄູ່ມືການປະກັນຄຸນນະພາບສະຖາບັນການສຶກສາຊັ້ນສູງ.

**ມາດຕາ 3:** ມອບໃຫ້ບັນດາ, ວິທະຍາໄລທີ່ສອນລະດັບຊັ້ນສູງຂຶ້ນໄປ ແລະ ມະຫາວິທະຍາໄລ ທີ່ຂຶ້ນກັບ ກະຊວງສຶກສາທິການ ແລະ ກິລາ ແລະ ຂຶ້ນກັບກະຊວງອ້ອມຂ້າງຈັດຕັ້ງປະຕິບັດຕາມ ປຶ້ມຄູ່ມື ເພື່ອໃຫ້ມີປະສິດທິຜົນ ແລະ ມີຄຸນນະພາບສູງສຸດ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດທ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ຮສ.ດຣ.ກອງສີ ແສງມະນີ

ບ່ອນສົ່ງ:

| | |
|---|---|
| 1. ຫ້ອງການກະຊວງສຶກສາທິການ ແລະ ກິລາ | 1 ສະບັບ |
| 2. ກົມກ່ຽວຂ້ອງ ກົມລະ | 1 ສະບັບ |
| 3. ເກັບມ້ຽນ | 2 ສະບັບ |

# ຄຳນຳ

ແນວຄວາມຄິດຂອງວຽກງານການປະກັນຄຸນນະພາບ ໄດ້ຖືກລິເລີ່ມ, ໃນຂະບວນການຜະລິດອຸດສາຫະກຳ ເຊິ່ງໃນໄລຍະຫຼັງສົງຄາມໂລກຄັ້ງທີ II ໄດ້ມີການແຂ່ງຂັນກັນຢ່າງເອົາຈິງເອົາຈັງ ທາງດ້ານຄຸນນະພາບຂອງຜົນຜະລິດ. ຫຼັງຈາກນັ້ນ, ໄດ້ມີການນຳໃຊ້ເຂົ້າໃນລະບົບການສຶກສາຊັ້ນສູງໃນທະວີບເອີລົບ ແລະ ອາເມລິກາ.

ໃນບັນດາປະເທດອາຊຽນ, ປະເທດຟີລິປິນເປັນປະເທດທຳອິດທີ່ສ້າງຕັ້ງອົງກອນຮັບຮອງຄຸນນະພາບຂຶ້ນ ໃນປີ 1957. ຫຼັງຈາກນັ້ນ 50ປີ, ໃນປີ 2007, ໂດຍການຮ່ວມມືກັນລະຫວ່າງ ກະຊວງສຶກສາທິການ ແລະ ເຄືອຂ່າຍຄຸນນະພາບອາຊີ-ປາຊີຟິກ (APQN – Asia Pacific Quality Network) ໄດ້ຈັດກອງປະຊຸມສຳມະນາສາກົນ ກ່ຽວກັບວຽກງານປະກັນຄຸນນະພາບຄັ້ງທຳອິດຂຶ້ນທີ່ນະຄອນຫຼວງວຽງຈັນ ສປປ ລາວ.

ສຳລັບ ສປປ ລາວ, ກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງຕັ້ງສູນປະກັນຄຸນນະພາບການສຶກສາຂຶ້ນໃນປີ 2008. ຫຼັງຈາກນັ້ນ, ສູນປະກັນຄຸນນະພາບການສຶກສາ ໂດຍການສົມທົບກັບກົມການສຶກສາຊັ້ນສູງພັດທະນາ ແລະ ທົດລອງນຳໃຊ້ ມາດຕະຖານຄຸນນະພາບການສຶກສາຊັ້ນສູງ ຕັ້ງແຕ່ປີ 2011 - 2013 ເຊິ່ງເປັນໄລຍະດຽວກັນກັບການຈັດຕັ້ງປະຕິບັດແຜນປະຕິຮູບລະບົບການສຶກສາໄລຍະII. ຫຼັງຈາກນັ້ນ, ມາດຕະຖານດັ່ງກ່າວຈຶ່ງໄດ້ຮັບການອະນຸມັດ ນຳໃຊ້ຢ່າງເປັນທາງການຕາມຂໍ້ຕົກລົງ ເລກທີ 2608/ສສກ.ສປຄ.13, ລົງວັນທີ 16 ກໍລະກົດ 2013.

ຄູ່ມືສະບັບນີ້ ເປັນເຄື່ອງມືແນະນຳການນຳໃຊ້ມາດຕະຖານຄຸນນະພາບການສຶກສາຊັ້ນສູງທີ່ກ່າວມາຂ້າງເທິງ ແລະ ວິທີການຈັດຕັ້ງປະຕິບັດວຽກງານປະກັນຄຸນນະພາບການສຶກສາ ໃນສະຖານການສຶກສາຊັ້ນສູງທັງພາກລັດ ແລະ ເອກະຊົນໃນ ສປປ ລາວ.

ປຶ້ມຄູ່ມືສະບັບນີ້ ປະກອບມີ 4 ບົດ ເຊິ່ງມີເນື້ອໃນໂດຍຫຍໍ້ ດັ່ງລຸ່ມນີ້:

ບົດທີ1 - ລະບົບປະກັນຄຸນນະພາບການສຶກສາ: ເປັນບົດແນະນຳໃຫ້ເຂົ້າໃຈວຽກງານການປະກັນຄຸນນະພາບການສຶກສາ, ໃຫ້ເຂົ້າໃຈລະບົບ ແລະ ກົນໄກຂອງ ສປປ ລາວ. ພ້ອມທັງອະທິບາຍໃຫ້ເຫັນເຖິງສາຍພົວພັນລະຫວ່າງ "ການປະກັນ" ແລະ "ການປະເມີນ".

ບົດທີ2 - ມາດຕະຖານຄຸນນະພາບການສຶກສາ: ເປັນບົດອະທິບາຍກ່ຽວກັບມາດຕະຖານ ແລະ ຕົວຊີ້ວັດ; ພ້ອມທັງຂໍ້ມູນຫຼັກຖານ, ຄຳຖາມພິຈາລະນາ, ຄວາມໝາຍຕໍ່ວົງຈອນ PDCA ແລະ ລະດັບຄຸນນະພາບ.

ບົດທີ3 - ການປະກັນຄຸນນະພາບພາຍໃນ ແນະນຳການຈັດຕັ້ງປະຕິບັດຕົວຈິງຢູ່ພາຍໃນສະຖານການສຶກສາ ເຊັ່ນ: ການສ້າງຕັ້ງ ໜ່ວຍປະກັນພາຍໃນ, ການເຄື່ອນໄຫວຂອງຄະນະປະເມີນຕົນເອງ ແລະ ອື່ນໆ.

ບົດທີ4 - ການຂຽນບົດລາຍງານ: ເປັນບົດອະທິບາຍ ໂຄງຮ່າງຂອງບົດລາຍງານການປະເມີນຕົນເອງ ແລະ ວິທີຂຽນບົດລາຍງານການປະເມີນຕົນເອງ.

ຄູ່ມືສະບັບນີ້ ໄດ້ຜ່ານຂະບວນການຄົ້ນຄວ້າ, ປຶກສາຫາລື ແລະ ຮຽບຮຽງຢ່າງຖີ່ຖ້ວນແລ້ວ. ແຕ່ເຖິງຢ່າງນັ້ນກໍ່ຕາມ, ຄົງປາສະຈາກບໍ່ໄດ້ເຖິງຂໍ້ຂາດ ຕົກບົກຜ່ອງ ຫຼື ຄວາມບໍ່ເໝາະສົມຕ່າງໆ. ຖ້າວ່າຜູ້ອ່ານ/ຜູ້ນຳໃຊ້ຄູ່ມືສະບັບນີ້ຫາກພົບເຫັນຂໍ້ຜິດພາດປະການໃດ ຂໍຄວາມກະລຸນາສົ່ງຄຳເຫັນອັນມີຄ່າຂອງທ່ານມາທີ່ສູນປະກັນຄຸນນະພາບການສຶກສາ ເພື່ອຈະໄດ້ຄົ້ນຄວ້າພິຈາລະນາປັບປຸງໃຫ້ສົມບູນດີຂຶ້ນກວ່າເກົ່າໃນຄັ້ງຕໍ່ໄປ.

ສູນປະກັນຄຸນນະພາບການສຶກສາ
ກະຊວງສຶກສາທິການ ແລະ ກິລາ

# ຄຳຂອບໃຈ

ຄູ່ມືສະບັບນີ້ຢູ່ໃນມື ແລະ ສາຍຕາຂອງທ່ານໄດ້ກໍ່ຍ້ອນມີຫຼາຍພາກສ່ວນ ໃຫ້ການຮ່ວມມື ແລະ ສະໜັບສະໜູນ.

ຄະນະຮັບຜິດຊອບຮຽບຮຽງ ແລະ ຈັດພິມປຶ້ມ " ຄູ່ມືເພື່ອການຈັດຕັ້ງປະຕິບັດການປະກັນຄຸນນະພາບ ສໍາລັບສະຖານການສຶກສາການສຶກສາຊັ້ນສູງ ", ຂໍສະແດງຄວາມຮູ້ບຸນຄຸນມາຍັງຄະນະຊີ້ນໍາ ເຊິ່ງປະກອບດ້ວຍ:

- ທ່ານ ຣສ. ດຣ. ກອງສີ ແສງມະນີ
  ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ
- ທ່ານ ວັນໄຊ ນໍລະແສງ
  ຜູ້ອໍານວຍການ ສູນປະກັນຄຸນນະພາບການສຶກສາ
- ທ່ານ ເຊັ້ງ ຊິງຊິນູ
  ຮອງຫົວໜ້າ ກົມການສຶກສາຊັ້ນສູງ

ຂໍສະແດງຄວາມຂອບໃຈມາຍັງນັກວິຊາການຈາກກົມຕ່າງໆ ທັງພາຍໃນ ແລະ ພາຍນອກກະຊວງສຶກສາທິການ ແລະ ກິລາ,ຈາກບັນດາສະຖານການສຶກສາຊັ້ນສູງທັງພາກລັດ ແລະ ເອກະຊົນ ທີ່ໄດ້ເຂົ້າຮ່ວມປຶກສາຫາລື, ໃຫ້ຂໍ້ຄິດເຫັນ ແລະ ຄໍາແນະນໍາຢ່າງກົງໄປກົງມາ.

ຂໍສະແດງຄວາມຂອບໃຈໂຄງການສ້າງຄວາມເຂັ້ມແຂງວຽກງານການສຶກສາຊັ້ນສູງ (SHEP – Strenghten Higher Education Project) ທີ່ໄດ້ປະກອບສ່ວນດ້ານງົບປະມານໃນການຈັດພິມປຶ້ມຄູ່ມືສະບັບນີ້, ເຮັດໃຫ້ສະຖານການສຶກສາຊັ້ນສູງໃນຂອບເຂດທົ່ວປະເທດທັງພາກລັດ ແລະ ເອກະຊົນສາມາດນໍາໃຊ້ໄດ້ຢ່າງທົ່ວເຖິງ.

ຄະນະຮັບຜິດຊອບຮຽບຮຽງ ແລະ ຈັດພິມ

ລາຍຊື່ ຄະນະຮັບຜິດຊອບຮຽບຮຽງ ແລະ ຈັດພິມ

- ທ່ານ ປັນຍາ ຈັນທະວົງ
  ຮອງຜູ້ອຳນວຍການ ສູນປະກັນຄຸນນະພາບການສຶກສາ
- ທ່ານ ອຳມະນີ ນໍລິນ
  ຫົວໜ້າພະແນກມາດຕະຖານ, ກົມການສຶກສາຊັ້ນສູງ
- ທ່ານນາງ ພູເຂົາຄຳ ສຸວັນ
  ຫົວໜ້າຂະແໜງປະກັນອາຊີວະ/ຊັ້ນສູງ,
  ສູນປະກັນຄຸນນະພາບການສຶກສາ
- ທ່ານ ສຸພັນໄຊ ສິງທຳມະວົງ
  ຮອງຫົວໜ້າ ຂະແໜງປະກັນອາຊີວະ/ຊັ້ນສູງ,
  ສູນປະກັນຄຸນນະພາບການສຶກສາ
- ທ່ານນາງ ໂອລິລັກ ໂສມອຸໄລ
  ວິຊາການ, ສູນປະກັນຄຸນນະພາບການສຶກສາ
- ທ່ານນາງ ໂມນີກ້າ ທິບພະລັງສີ
  ວິຊາການ, ສູນປະກັນຄຸນນະພາບການສຶກສາ

# ສາລະບານ

**ຂໍ້ຕົກລົງລັດຖະມົນຕີ (ມາດຕະຖານ)....................................................I**

**ຂໍ້ຕົກລົງລັດຖະມົນຕີ (ຄູ່ມື) ..........................................................II**

**ຄໍານໍາ..........................................................................................III**

**ຄໍາຂອບໃຈ ................................................................................ V**

**ອັກສອນຫຍໍ້................................................................................. IX**

**ບົດທີ 1: ລະບົບປະກັນຄຸນນະພາບການສຶກສາ.........................................1**

1.1. ຄຸນນະພາບການສຶກສາ ແມ່ນຫຍັງ? .........................................1

1.2 ການປະກັນຄຸນນະພາບ ການສຶກສາ ແມ່ນຫຍັງ?............................2

1.3 ມາດຕະຖານ ສະຖານການສຶກສາ................................................5

1.4. ຄວາມສໍາຄັນຂອງການປະກັນຄຸນນະພາບ....................................8

1.5. ກົນໄກການປະກັນຄຸນນະພາບ...................................................9

1.5.1 ການປະກັນຄຸນນະພາບພາຍໃນ...........................................9

1.5.2 ການປະກັນຄຸນນະພາບພາຍນອກ .......................................10

1.6 ສາຍພົວພັນ ລະຫວ່າງ ການປະກັນ ແລະ ການປະເມີນ .........................11

1.6.1 ການປະເມີນຕົນເອງ.......................................................11

1.6.2 ການປະເມີນພາຍໃນ .......................................................11

1.6.3 ການປະເມີນພາຍນອກ.....................................................12

**ບົດທີ2: ມາດຕະຖານຄຸນນະພາບ ສະຖານການສຶກສາ .................................16**

ມາດຕະຖານ I: ວິໄສທັດ, ພາລະກິດ ແລະ ຈຸດໝາຍ ..........................18

ມາດຕະຖານII: ການຄຸ້ມຄອງ ..................................................20

ມາດຕະຖານIII: ບຸກຄະລາກອນ ...............................................22

ມາດຕະຖານIV: ຫຼັກສູດ.........................................................24

ມາດຕະຖານV: ປະສິດທິຜົນການຮຽນ-ການສອນ ...........................26

ມາດຕະຖານVI: ການສົ່ງເສີມຜູ້ຮຽນ..........................................28

ມາດຕະຖານVII: ສະພາບແວດລ້ອມ ແລະ ແຫຼ່ງຮຽນຮູ້......................30
ມາດຕະຖານVIII: ລະບົບຂໍ້ມູນຂ່າວສານ.....................................33
ມາດຕະຖານIX: ລະບົບປະກັນຄຸນນະພາບ....................................35
ມາດຕະຖານX: ການຄົ້ນຄວ້າ ແລະ ບໍລິການສັງຄົມ..........................37
**ບົດທີ 3: ການປະກັນຄຸນນະພາບພາຍໃນ..............................................39**
3.1. ຄວາມສໍາຄັນ ແລະ ຈຸດປະສົງ................................................39
3.2. ຫຼັກການພື້ນຖານ..................................................................39
3.3. ໜ່ວຍປະກັນພາຍໃນ (QAU)..................................................46
3.4. ຄະນະກໍາມະການປະເມີນຕົນເອງ (SAC)..................................48
3.5. ຂະບວນການປະເມີນຕົນເອງ................................................50
3.6. ບາງຫຼັກການ ໃນການສໍາພາດ.................................................52
**ບົດທີ4: ບົດລາຍງານການປະເມີນ.......................................................53**
4.1. ພາບລວມຂອງບົດລາຍງານ..................................................53
4.2. ໂຄງຮ່າງຂອງບົດລາຍງານການປະເມີນຕົນເອງ............................55
**ເອກະສານຊ້ອນທ້າຍ.......................................................................58**

# ອັກສອນຫຍໍ້

| | |
|---|---|
| AQAF | ASEAN Quality Assurance Framework<br>ຂອບງານປະກັນຄຸນນະພາບອາຊຽນ |
| AQAN | ASEAN Quality Assurance Network<br>ເຄືອຂ່າຍອົງກອນປະກັນຄຸນນະພາບອາຊຽນ |
| DHE | Department of Higher Education<br>ກົມການສຶກສາຊັ້ນສູງ |
| EQA | External Quality Assurance<br>ການປະກັນຄຸນນະພາບການສຶກສາພາຍນອກ |
| EQAC | Education Quality Assurance Centre<br>ສູນປະກັນຄຸນນະພາບການສຶກສາ |
| HEIs | Higher Education Institutions<br>ສະຖາບັນການສຶກສາຊັ້ນສູງ |
| IQA | Internal Quality Assurance<br>ການປະກັນຄຸນນະພາບການສຶກສາພາຍໃນ |
| NQF | National Qualifications Framework<br>ຂອບວຸດທິແຫ່ງຊາດ |
| QAU | Quality Assurance Unit<br>ໜ່ວຍປະກັນຄຸນນະພາບ |
| SAC | Self-Assessment Committee<br>ຄະນະກຳມະການປະເມີນຕົນເອງ |
| SAR | Self-Assessment Report<br>ບົດລາຍງານການປະເມີນຕົນເອງ |

# ບົດທີ 1: ລະບົບປະກັນຄຸນນະພາບການສຶກສາ

## 1.1. ຄຸນນະພາບການສຶກສາ ແມ່ນຫຍັງ?

(01) ໃນບັນດານິຕິກຳ, ບົດລາຍງານ ແລະ ເອກະສານຕ່າງໆຂອງຂະແໜງການສຶກສາຄຳວ່າ "ຄຸນນະພາບ" ໄດ້ຖືກກ່າວເຖິງເລື້ອຍໆ, ແຕ່ກໍ່ບໍ່ຄ່ອຍພົບເຫັນການນິຍາມ ຫຼື ການກຳນົດຄວາມໝາຍຂອງມັນ. ວັດຈະນານຸກົມພາສາລາວຫຼາຍສະບັບໃຫ້ຄຳອະທິບາຍໄວ້ວ່າ: ຄຸນນະພາບ ແມ່ນ ***ລັກສະນະຄວາມດີ ລັກສະນະຄວາມເປັນປະໂຫຍດ***, ໂດຍທົ່ວໄປແລ້ວຕໍ່ກັບວັດຖຸໃດໜຶ່ງພວກເຮົາມັກເວົ້າໃນຮູບແບບທີ່ວ່າ: ມີຄຸນນະພາບ ຫຼື ບໍ່ມີຄຸນນະພາບ ໃນເວລາເຮົາພິຈາລະນາເຖິງຄວາມເໝາະສົມຂອງວັດຖຸນັ້ນໆ ຫຼື ຂະບວນການທີ່ຈະພາໃຫ້ບັນລຸເປົ້າໝາຍໃດໜຶ່ງ. ເພາະສະນັ້ນ, ຄຸນນະພາບການສຶກສາກໍ່ແມ່ນລັກສະນະຄວາມດີ ຫຼື ຄວາມເປັນປະໂຫຍດທີ່ຢາກໃຫ້ເກີດຢູ່ນຳການສຶກສານັ້ນເອງ.

(02) ໃນການກຳນົດນິຍາມຕາຍຕົວໃຫ້ກັບ ຄຸນນະພາບການສຶກສາເປັນບັນຫາຫຍຸ້ງຍາກຫຼາຍ ເນື່ອງຈາກວ່າຄຸນນະພາບເກີດຈາກປັດໄຈຫຼາຍດ້ານທີ່ສຳຄັນເຊັ່ນ: ການເຝິກອົບຮົມຄູ, ວິທີການສອນ, ການບໍລິຫານຄຸ້ມຄອງ, ຫຼັກສູດ, ສື່ການຮຽນການສອນ, ພື້ນຖານໂຄງລ່າງ, ອາຄານສະຖານທີ່, ສິ່ງອຳນວຍຄວາມສະດວກ ແລະ ປັດໄຈອື່ນໆອີກຫຼາຍຢ່າງ. ປັດໄຈເຫຼົ່ານີ້ມີສາຍພົວພັນເຊິ່ງກັນ ແລະ ກັນຢ່າງສະໜິດແໜ້ນ, ຖ້າຫາກປັດໄຈໃດໜຶ່ງຂາດຄຸນນະພາບມັນກໍ່ຈະສົ່ງຜົນສະທ້ອນທີ່ບໍ່ດີ ຕໍ່ປັດໄຈອື່ນໆເຊັ່ນກັນ.

(03) ອີກມຸມມອງໜຶ່ງຂອງຄຸນນະພາບການສຶກສາ ເນັ້ນໜັກຢູ່ທີ່ເປົ້າໝາຍ, ຈຸດໝາຍ ຫຼື ຈຸດປະສົງຂອງການສຶກສາ. ໃນກົດໝາຍວ່າດ້ວຍການສຶກສາ ມາດຕາ2 ໄດ້ກຳນົດຈຸດປະສົງຂອງການສຶກສາແມ່ນ "...ເພື່ອພັດທະນາຊັບພະຍາກອນມະນຸດ ໃຫ້ຂະຫຍາຍຕົວຢ່າງຮອບດ້ານ"; ມາດຕາ 5 ໄດ້ກຳ

ນິດຫຼັກການພື້ນຖານໄວ້6 ຂໍ້, ໃນນັ້ນຫຼັກການທຳອິດແມ່ນ "ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາຊັບພະຍາກອນມະນຸດແຫ່ງຊາດ"; ໂດຍກົດໝາຍໄດ້ກຳນົດເປັນຂອບລວມໄວ້ໃຫ້ ແຕ່ໃນພາກປະຕິບັດຕົວຈິງ ສະຖານການສຶກສາຕ້ອງກຳນົດເປົ້າໝາຍ, ຈຸດໝາຍ ຫຼື ຈຸດປະສົງສະເພາະຂອງສະຖານການສຶກສາຂອງຕົນ, ໂດຍອີງຕາມພາລະບົດບາດ, ພາລະກິດ ແລະ ທ່າແຮງຕ່າງໆຢ່າງເໝາະສົມ. ຄຸນນະພາບການສຶກສາໃນທີ່ນີ້ກໍ່ຈະພິຈາລະນາທີ່ໝາກຜົນ ຫຼື ຜົນສຳເລັດວ່າສາມາດບັນລຸເປົ້າໝາຍ, ຈຸດໝາຍ ຫຼື ຈຸດປະສົງໄດ້ລະດັບໃດ.

## 1.2 ການປະກັນຄຸນນະພາບ ການສຶກສາ ແມ່ນຫຍັງ?

(04) ກົດໝາຍວ່າດ້ວຍການສຶກສາ ມາດຕາ64 ໄດ້ກຳນົດໄວ້ວ່າ: "ການປະກັນຄຸນນະ ພາບການສຶກສາແມ່ນການກຳນົດມາດຕະຖານ, ການຕິດຕາມ, ປະເມີນຜົນ ແລະ ກວດສອບຄຸນນະພາບການສຶກສາທັງພາກລັດ ແລະ ເອກະຊົນ ດ້ວຍການຈັດຕັ້ງກົນໄກປະກັນຄຸນນະພາບພາຍໃນ ແລະ ພາຍນອກໂດຍມີຈຸດປະ ສົງເພື່ອຮັບຮອງ ແລະ ຢັ້ງຢືນຜົນຂອງການສຶກສາ, ສ້າງຄວາມເຊື່ອໝັ້ນຕໍ່ສັງ ຄົມ, ຊຸມຊົນ ແລະ ຜູ້ປົກຄອງດຶງດູດຄວາມສົນໃຈຕໍ່ການຮຽນ ເຮັດໃຫ້ຜົນການສຶກສາມີຄຸນນະພາບທຽບເທົ່າກັບມາດຕະຖານພາກພື້ນ ແລະ ສາກົນ.".

(05) ການປະກັນຄຸນນະພາບມີຄຸນລັກສະນະເປັນລະບົບກົນໄກ (systematics) ແລະ ດຳເນີນໄປເປັນຂະບວນການຢ່າງຕໍ່ເນື່ອງ (continuous process); "ລະບົບກົນໄກ" ໝາຍຄວາມວ່າການປະກັນຄຸນນະພາບຕ້ອງມີຂັ້ນຕອນຈະແຈ້ງ ແລະ ຖືກກຳນົດເປັນນິຕິກຳ ຫຼື ລະບຽບການສາມາດຈັດຕັ້ງປະຕິບັດໄດ້; "ດຳເນີນໄປເປັນຂະບວນການຢ່າງຕໍ່ເນື່ອງ" ໝາຍເຖິງ ການຈັດຕັ້ງປະຕິບັດຢ່າງເປັນປົກກະຕິຖືກບັນຈຸຢູ່ໃນແຜນການ, ແຜນງານເປັນວຽກປະຈຳ ດຳເນີນໄປຢ່າງຕໍ່ເນື່ອງ ໃນກຳນົດເວລາຮອບວຽນໃດໜຶ່ງ.

(06) ການປະກັນຄຸນນະພາບ ມີເປົ້າໝາຍຂອງການຮັບປະກັນໃນຫຼາຍລະດັບທີ່ແຕກຕ່າງກັນເຊັ່ນ: ການປະກັນຄຸນນະພາບລະບົບການສຶກສາ (Quality Assurance of Education System), ການປະກັນຄຸນນະພາບສະຖານການສຶກສາ (Quality Assurance of Institution), ການປະກັນຄຸນນະພາບຫຼັກສູດການສຶກສາ (Quality Assurance of Programme) ແລະ ການປະກັນຄຸນນະພາບວຸດທິການສຶກສາ (Quality Assurance of Qualifications) ເປັນຕົ້ນ.

(07) ການປະກັນຄຸນນະພາບລະບົບການສຶກສາຈະດຳເນີນການຢູ່ໃນລະດັບມະຫາພາກເຊັ່ນວ່າ: ນະໂຍບາຍສົ່ງເສີມການສຶກສາເປັນແນວໃດ? ງົບປະມານລົງທຶນໃສ່ການສຶກສາເປັນແນວໃດ? ນິຕິກຳຄຸ້ມຄອງການສຶກສາເປັນແນວໃດ? ວິທີການກໍ່ສ້າງຄູເປັນແນວໃດ? ເປັນຕົ້ນ ເຊິ່ງເປັນການຕິດຕາມ ແລະ ທົບທວນໃນລະດັບພາບລວມຂອງປະເທດ, ໂດຍກະຊວງສຶກສາກໍ່ຄືລັດຖະບານຂອງປະເທດນັ້ນໆ ຈະປະເມີນລະບົບການສຶກສາຂອງຕົນເພື່ອພັດທະນາ ແລະ ປັບປຸງໃນຂອດຕ່າງໆໃຫ້ມີຄຸນນະພາບດີຂຶ້ນ ແລະ ມີຄວາມໝັ້ນໃຈຫຼາຍຂຶ້ນ.

(08) ການປະກັນຄຸນນະພາບສະຖານການສຶກສາ ຈະດຳເນີນການຢູ່ໃນລະດັບສະຖານການສຶກສາໝາຍວ່າ ສະຖານການສຶກສາໃດໜຶ່ງຈະຕ້ອງຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດວຽກງານຂອງຕົນໂດຍອີງຕາມມາດຕະຖານຄຸນນະພາບສະຖານການສຶກສາເພື່ອພັດທະນາ ແລະ ປັບປຸງໃນຂອດຕ່າງໆໃຫ້ມີຄຸນນະພາບດີຂຶ້ນໃຫ້ມີຄວາມໝັ້ນໃຈຫຼາຍຂຶ້ນ; ກ້າວໄປເຖິງການປະເມີນພາຍນອກເພື່ອຮັບຮອງຄຸນນະພາບ ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ.

(09) ການປະກັນຄຸນນະພາບຫຼັກສູດການສຶກສາຈະດຳເນີນການເປັນແຕ່ລະຫຼັກສູດການສຶກສາໝາຍຄວາມວ່າຫຼັກສູດການສຶກສາໃດໆທີ່ໄດ້ຈັດຕັ້ງປະຕິບັດການຮຽນ-ການສອນໄປແລ້ວ ຕ້ອງໄດ້ຈັດຕັ້ງການປະເມີນຫຼັກສູດໂດຍອີງຕາມມາດຕະຖານຄຸນນະພາບຫຼັກສູດການສຶກສາເປັນມາດຕະຖານທີ່ມີ

ລາຍລະອຽດໃນສາຂາຂອງໃຜມັນເພື່ອພັດທະນາ ແລະ ປັບປຸງໃນຂອດຕ່າງໆ ໃຫ້ມີຄຸນນະພາບດີຂຶ້ນໃຫ້ມີຄວາມໝັ້ນໃຈຫຼາຍຂຶ້ນ; ກ້າວໄປເຖິງການປະ ເມີນພາຍ ນອກເພື່ອຮັບຮອງຄຸນນະພາບສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ. ການປະກັນ ປະເພດນີ້ນໍາໃຊ້ທົ່ວໄປໃນສາຍການສຶກສາຊັ້ນສູງ ແລະ ສ່ວນ ໜຶ່ງໃນສາຍອາຊີວະສຶກສາ.

(10) ການປະກັນຄຸນນະພາບວຸດທິການສຶກສາຈະດໍາເນີນການຢູ່ໃນລະດັບຜູ້ ຮຽນເປັນລາຍບຸກຄົນເຊິ່ງມັກນໍາໃຊ້ໃນສາຍອາຊີວະສຶກສາທີ່ເນັ້ນໜັກຄວາມ ຊໍານານງານຂອງຜູ້ຮຽນເປັນພິເສດ. ກ່ອນທີ່ຜູ້ຮຽນຈົບຈະໄດ້ຮັບວຸດທິໃດ ໜຶ່ງນັ້ນ ຕ້ອງໄດ້ຈັດຕັ້ງການປະເມີນຜູ້ຮຽນໂດຍອີງຕາມມາດຕະຖານສະມັດ ຖະພາບ, ການປະເມີນມີທັງການປະເມີນຂອງຄູຝຶກທີ່ເປັນຜູ້ສິດສອນໃຫ້ ແລະ ການປະເມີນຂອງພາກສ່ວນພາຍນອກທີ່ເປັນຜູ້ຊໍານານງານ ເປັນຕົວ ແທນມາຈາກສະຖານປະກອບການ ຫຼື ພາກສ່ວນທີ່ຊົມໃຊ້ແຮງງານໃນສາຂາ ນັ້ນໆ. ໃນສາຍການສຶກສາຊັ້ນສູງຈະຖືເອົາການປະກັນຄຸນນະພາບຫຼັກສູດ ເປັນຕົວແທນຂອງການປະກັນຄຸນນະພາບວຸດທິ.

(11) ການປະກັນຄຸນນະພາບຫຼັກສູດ ແລະ ການປະກັນຄຸນນະພາບວຸດທິ ຍັງ ຮຽກຮ້ອງ ໃຫ້ມີການພັດທະນາຂອບວຸດທິແຫ່ງຊາດ ເປັນມາດຕະຖານລວມ ໃຫ້ແກ່ການພັດທະນາຫຼັກສູດລະດັບຕ່າງໆ ແລະ ການພັດທະນາມາດຕະຖານ ສະມັດຖະພາບ; ໃນປັດຈຸບັນ, ຂອບວຸດທິແຫ່ງຊາດ ສະບັບຮ່າງ ປະກອບມີ 8 ລະດັບ, 4 ດ້ານຄື: ຄວາມຮູ້, ຄວາມຊໍານານງານ (ທັກສະ), ການນໍາໃຊ້ຄວາມ ຮັບຜິດຊອບ ແລະ ຂີດຄວາມສາມາດທາງສັງຄົມ.

(12) ໃນປີ2008, ກະຊວງສຶກສາທິການ ແລະ ກິລາ ໄດ້ສ້າງຕັ້ງ “ສູນ ຮັບປະກັນຄຸນນະພາບການສຶກສາ” ເປັນກົງຈັກບໍລິຫານໜຶ່ງຂອງກະຊວງ ມີ ພາລະບົດບາດເປັນເສນາທິການ ໃນວຽກງານປະກັນຄຸນນະພາບການສຶກສາ (ສະບັບເລກທີ 1438/ສສ.ຈຕ ລົງວັນທີ 10/07/2008) ແລະ ປ່ຽນຊື່ມາ ເປັນ “ສູນປະກັນຄຸນນະພາບການສຶກສາ” ໃນປີ2012 (ສະບັບເລກທີ 3481/ ສສກ.ຈຕ ລົງວັນທີ 10/09/2012).

(13) ສູນປະກັນຄຸນນະພາບການສຶກສາ ໄດ້ເລີ່ມວຽກງານປະກັນຄຸນນະພາບການສຶກສາ ໃນລະດັບສະຖານການສຶກສາໄປແລ້ວ, ສ່ວນການປະກັນຄຸນນະພາບ ໃນລະດັບຫຼັກສູດການສຶກສາ ແລະ ວຸດທິການສຶກສາ ຈະເລີ່ມຈັດຕັ້ງປະຕິບັດ ໃນປີ2017, ໂດຍກໍາລັງກະກຽມ ດໍາລັດນາຍົກ ວ່າດ້ວຍຂອບວຸດທິແຫ່ງຊາດ ເຊິ່ງເປັນບ່ອນອີງ ສໍາຄັນຂອງວຽກງານດັ່ງກ່າວ.

## 1.3 ມາດຕະຖານ ສະຖານການສຶກສາ

(14) ກົດໝາຍວ່າດ້ວຍການສຶກສາ ມາດຕາ30 ໄດ້ຈັດແບ່ງປະເພດສະຖານການສຶກສາ ອອກດັ່ງນີ້:

ຕາຕະລາງ 1. ປະເພດສະຖານການສຶກສາ

| ສາຍ / ປະເພດ | ອາຊີວະສຶກສາ | ການສຶກສາຊັ້ນສູງ |
|---|---|---|
| ສູນ | ສູນຝຶກອົບຮົມ | - |
| ໂຮງຮຽນ | ໂຮງຮຽນ | - |
| ວິທະຍາໄລ | ວິທະຍາໄລ | ວິທະຍາໄລ |
| ສະຖາບັນ / ວິທະຍາຄານ | ສະຖາບັນ | ສະຖາບັນ / ວິທະຍາຄານ |
| ມະຫາວິທະຍາໄລ | - | ມະຫາວິທະຍາໄລ |

(15) ກົດໝາຍວ່າດ້ວຍການສຶກສາ ມາດຕາ32 ໄດ້ກໍານົດ ມາດຕະຖານສະຖານການສຶກສາ ເປັນພື້ນຖານໄວ້ວ່າ "ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ມີມາດຕະຖານຕົ້ນຕໍຄື ຫຼັກສູດ, ສື່ການຮຽນການສອນ, ຄູ ແລະ ບຸກຄະລາກອນການສຶກສາ, ພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ."; ລາຍລະອຽດຂອງມາດຕະຖານ ໄດ້ຖືກຜັນຂະຫຍາຍ ເປັນຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ສຶກສາທິການ ແລະ ກິລາ ເປັນລະບຽບການ

ສະເພາະ ທີ່ສະຖານການສຶກສາ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດຕ້ອງປະຕິບັດຕາມ, ຫາກສາມາດ ເພີ່ມຕື່ມບາງມາດຕະຖານ ເພື່ອໃຫ້ແທດເໝາະກັບຈຸດພິເສດຂອງຂະແໜງການຕົນ. ດຳລັດວ່າດ້ວຍການສຶກສາຊັ້ນສູງ ມາດຕາ27 ວັກ2 ໄດ້ກຳນົດໄວ້ວ່າ: ***"ສະຖາບັນການສຶກສາຊັ້ນສູງທຸກຮູບແບບ, ທຸກປະເພດ ໃຫ້ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານປະກັນຄຸນນະພາບການສຶກສາຊັ້ນສູງ ຂອງກະຊວງສຶກສາທິການ ແລະ ກິລາກຳນົດໄວ້."***

(16) ໃນປີ2011, ໂດຍການສະເໜີຂອງສູນປະກັນຄຸນນະພາບ ແລະ ກົມອາຊີວະສຶກສາ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໄດ້ເຊັນອະນຸມັດ ***ມາດຕະຖານຄຸນນະພາບສະຖານການສຶກສາ ສາຍອາຊີວະສຶກສາ*** ສະບັບເລກທີ 941/ສສ.ສປຄ ລົງວັນທີ 08/04/2011 (10 ມາດຕະຖານ 32 ຕົວຊີ້ວັດ) ເປັນມາດຕະຖານຄຸນນະພາບ ສະບັບທຳອິດຂອງ ສປປ ລາວ. ພາຍຫຼັງຜ່ານການທົດລອງນຳໃຊ້ໄປໃນໄລຍະໜຶ່ງ ຈຶ່ງໄດ້ປັບປຸງໃຫ້ມີຄວາມສອດຄ່ອງ ກັບການປະຕິຮູບລະບົບການສຶກສາແຫ່ງຊາດ ແລະ ໄດ້ຮັບການອະນຸມັດນຳໃຊ້ ຕາມຂໍ້ຕົກລົງ ສະບັບເລກທີ 4166/ສສກ.ສປຄ ລົງວັນທີ 07/09/2015 (12 ມາດຕະຖານ 45 ຕົວຊີ້ວັດ).

(17) ພ້ອມດຽວກັນນີ້, ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໄດ້ອະນຸມັດ ມາດຕະຖານຄຸນນະພາບສະຖານການສຶກສາ ສຳລັບຊັ້ນມັດທະຍົມສຶກສາ (6 ມາດຕະຖານ 45 ຕົວຊີ້ວັດ) ສະບັບເລກທີ 2166/ສສກ.ສປຄ, ຊັ້ນປະຖົມສຶກສາ (6 ມາດຕະຖານ 42 ຕົວຊີ້ວັດ) ສະບັບເລກທີ 2167/ສສກ.ສປຄ ລົງວັນທີ 28/06/2012.

(18) ໃນປີ2013, ໂດຍການສະເໜີຂອງສູນປະກັນຄຸນນະພາບ ແລະ ກົມການສຶກສາຊັ້ນສູງ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໄດ້ເຊັນອະນຸມັດ ***ມາດຕະຖານຄຸນນະພາບສະຖານການສຶກສາ ຊັ້ນສູງ*** ສະບັບເລກທີ 2608/ສສກ.ສປຄ ລົງວັນທີ 16/07/2013 (10 ມາດຕະຖານ 50 ຕົວຊີ້ວັດ).

(19) ມາດຕະຖານ ສະຖານການສຶກສາ ສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ມີຄວາມໃກ້ຄຽງກັນຫຼາຍ ແລະ ສາມາດ ສົມທຽບກັນໄດ້ ດັ່ງຕາຕະລາງ ລຸ່ມນີ້:

ຕາຕະລາງ 2. ສົມທຽບ ມາດຕະຖານສະຖານການສຶກສາ

| **ສາຍອາຊີວະສຶກສາ, 2015<br>12 ມາດຕະຖານ 45 ຕົວຊີ້ວັດ** | | **ສາຍການສຶກສາຊັ້ນສູງ, 2013<br>10 ມາດຕະຖານ 50 ຕົວຊີ້ວັດ** | |
|---|---|---|---|
| **1** | ວິໄສທັດ, ພາລະກິດ ແລະ ຈຸດໝາຍ (3) | 1 | ວິໄສທັດ, ພາລະກິດ ແລະ ຈຸດໝາຍ (3) |
| **2** | ການຄຸ້ມຄອງ (4) | 2 | ການຄຸ້ມຄອງ ແລະ ບໍລິຫານ (6) |
| **3** | ບຸກຄະລາກອນ (5) | 3 | ການພັດທະນາບຸກຄະລາກອນ (8) |
| **4** | ຫຼັກສູດ (4) | 4 | ການພັດທະນາຫຼັກສູດ (5) |
| **5** | ປະລິດທິຜົນການຮຽນ-ການສອນ (5) | 5 | ປະລິດທິຜົນການຮຽນ-ການສອນ (3) |
| **6** | ການສົ່ງເສີມຜູ້ຮຽນ (4) | 6 | ການສົ່ງເສີມນັກສຶກສາ (7) |
| **7** | ສະພາບແວດລ້ອມ (3) | 7 | ສະພາບແວດລ້ອມ ແລະ ແຫຼ່ງການຮຽນຮູ້ (8) |
| **8** | ແຫຼ່ງການຮຽນຮູ້ (3) | | |
| **9** | ລະບົບຂໍ້ມູນຂ່າວສານ (5) | 8 | ລະບົບຂໍ້ມູນຂ່າວສານ (3) |
| **10** | ລະບົບປະກັນຄຸນນະພາບ (3) | 9 | ລະບົບປະກັນຄຸນນະພາບພາຍໃນ (4) |
| **11** | ການສົ່ງເສີມຫົວຄິດປະດິດສ້າງ ແລະ ການບໍລິການສັງຄົມ (3) | 10 | ການຄົ້ນຄວ້າວິທະຍາສາດ ແລະ ການບໍລິການວິຊາການ (3) |
| **12** | ຄວາມເພິ່ງພໍໃຈຂອງຜູ້ຮຽນ, ຜູ້ຮຽນຈົບ ແລະ ຜູ້ຈ້າງງານ (3) | - | - |

ໝາຍເຫດ: ຕົວເລກໃນວົງເລັບຂ້າງເທິງ ແມ່ນຈຳນວນຕົວຊີ້ວັດ ໃນແຕ່ລະມາດຕະຖານ

## 1.4. ຄວາມສຳຄັນຂອງການປະກັນຄຸນນະພາບ

(20) ລັດຖະບານ ໄດ້ກຳນົດວິໄສທັດ ຂອງການພັດທະນາຂະແໜງການວັດທະນະທຳ-ສັງຄົມ ຮອດປີ2030 ດັ່ງນີ້: "ຊັບພະຍາກອນມະນຸດ ໄດ້ຮັບການພັດທະນາ ໃຫ້ມີຄຸນນະພາບໃກ້ຄຽງກັບພາກພື້ນ ແລະ ສາກົນ, ເປັນກຳລັງການຜະລິດທີ່ເຂັ້ມແຂງ, ຕອບສະໜອງໄດ້ຄວາມຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຫຼາຍຂຶ້ນ, ລະດັບການສຶກສາທົ່ວໄປຂອງພົນລະເມືອງລາວ ຈົບຊັ້ນມັດທະຍົມຕອນປາຍ, ປະຊາຊົນໄດ້ຮັບການບໍລິການດ້ານສາທາລະນະສຸກທີ່ມີຄຸນນະພາບຢ່າງທົ່ວເຖິງ ແລະ ມີອາຍຸຍືນສະເລ່ຍສູງກວ່າ 75 ປີ.".

(21) ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດໄວ້ວ່າ: "ຮອດປີ2030 ໃຫ້ພົນລະເມືອງລາວທຸກຄົນ ໄດ້ຮັບການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນ ເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້.".

(22) ວິໄສທັດຂອງລັດຖະບານ ຕໍ່ຂະແໜງການວັດທະນະທຳ-ສັງຄົມ ແລະ ວິໄສທັດຂອງກະຊວງສຶກສາທິການ ແລະ ກິລາ ຮອດປີ2030 ໄດ້ກຳນົດແຈ້ງເຖິງຄວາມຮຽກຮ້ອງຕ້ອງການຂອງປະເທດຊາດ ຕໍ່ຄຸນນະພາບຂອງການພັດທະນາຊັບພະຍາກອນມະນຸດ ກໍ່ຄື ຄຸນນະພາບການສຶກສາ ໃຫ້ໃກ້ຄຽງ, ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້. ບຸກຄະລາກອນການສຶກສາ ສ່ວນຫຼາຍ ອາດຈະເຂົ້າໃຈໄດ້ເຖິງ ຄວາມສຳຄັນຂອງຄຸນນະພາບການສຶກສາ ແຕ່ວ່າ ເພື່ອຈະໃຫ້ເກີດມີຄຸນນະພາບ ໃນວຽກງານ ຫຼື ໃນຂົງເຂດທີ່ຕົນຮັບຜິດຊອບນັ້ນ ຕ້ອງເຮັດແນວໃດ? ຕ້ອງເລີ່ມຈາກຈຸດໃດກ່ອນ? ຄົງບໍ່ແມ່ນ ຄຳຖາມ ທີ່ສາມາດຊອກຫາຄຳຕອບໄດ້ງ່າຍໆ.

(23) "ຄຸນນະພາບ ບໍ່ອາດເກີດຂຶ້ນໄດ້ໂດຍບັງເອີນ" ເປັນປັດຊະຍາໜຶ່ງທີ່ມັກຖືກກ່າວເຖິງ ໃນວຽກງານປະກັນຄຸນນະພາບ; ໝາຍຄວາມວ່າ ຢາກໃຫ້ມີຄຸນນະພາບ ມັນຮຽກຮ້ອງໃຫ້ມີການວາງແຜນ, ການຈັດຕັ້ງປະຕິບັດ, ການຕິດຕາມ-ປະເມີນຜົນ ແລະ ການປັບປຸງພັດທະນາຢ່າງຕໍ່ເນື່ອງ; ເພື່ອເຮັດໄດ້ແນວນັ້ນ ການປະກັນຄຸນນະພາບ ເປັນເຄື່ອງມືທີ່ດີອັນໜຶ່ງ ທີ່ບັນດາປະເທດກໍາລັງພັດທະນາ ແລະ ພັດທະນາແລ້ວ ໄດ້ນໍາໃຊ້ເຂົ້າໃນວຽກງານການສຶກສາຂອງເຂົາເຈົ້າ ມາເປັນເວລາດົນນານແລ້ວ.

(24) ການປະກັນຄຸນນະພາບ ຊ່ວຍໃຫ້ສະຖານການສຶກສາ ສາມາດ ສ້າງແຜນການ ແລະ ພັດທະນາຄຸນນະພາບການສຶກສາຂອງຕົນ ໃຫ້ດີຂຶ້ນໄປເລື້ອຍໆຢ່າງຕໍ່ເນື່ອງ ເປັນການສ້າງຄວາມໝັ້ນໃຈໃຫ້ແກ່ຕົນເອງ ນັບແຕ່ຜູ້ບໍລິຫານ, ພະນັກງານ-ຄູອາຈານ ແລະ ນັກຮຽນນັກສຶກສາ ໄດ້ຮັບຮູ້ວ່າສະຖານການສຶກສາຂອງຕົນໄດ້ຈັດຕັ້ງປະຕິບັດ ຖືກຕ້ອງ ແລະ ສອດຄ່ອງກັບເປົ້າໝາຍຂອງຕົນເອງ; ພ້ອມດຽວກັນນັ້ນ ກໍ່ຍັງກ້າວໄປເຖິງຈຸດຂອງການສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ, ເປັນຫຼັກການ ແລະ ບ່ອນອີງ ໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## 1.5. ກົນໄກການປະກັນຄຸນນະພາບ

(25) ກົດໝາຍວ່າດ້ວຍການສຶກສາ ມາດຕາ65 ໄດ້ກໍານົດກົນໄກຂອງວຽກງານການປະກັນຄຸນນະພາບການສຶກສາ ອອກເປັນ 2 ພາກສ່ວນຄື: ການປະກັນຄຸນນະພາບພາຍໃນ (IQA: Internal Quality Assurance, **ໄອຄິວເອ**) ແລະ ການປະກັນຄຸນນະພາບພາຍນອກ (EQA: External Quality Assurance, **ອີຄິວເອ**).

### 1.5.1 ການປະກັນຄຸນນະພາບພາຍໃນ

(26) ການປະກັນຄຸນນະພາບພາຍໃນ ແມ່ນຂະບວນການຕິດຕາມ-ປະເມີນຜົນ **ໂດຍສະຖານການສຶກສາເອງ** ເພື່ອເກັບກໍາຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ່າງໆ ຕາມມາດຕະຖານຄຸນນະພາບ ສັງລວມຕີລາຄາ ໃຫ້

ເຫັນເຖິງ ຈຸດດີ, ຂໍ້ຄົງຄ້າງ, ວິເຄາະສະພາບບັນຫາ ແລະ ວາງແຜນພັດທະນາ ເພື່ອປັບປຸງຄຸນນະພາບ ຢ່າງຕໍ່ເນື່ອງ.

(27) ດໍາລັດວ່າດ້ວຍການສຶກສາຊັ້ນສູງ ໝວດ5 ມາດຕາ27 “ການຈັດຕັ້ງປະກັນຄຸນນະພາບ” ວັກ1 ໄດ້ກໍານົດໄວ້ວ່າ: “ສະຖາບັນການສຶກສາຊັ້ນສູງທຸກຮູບແບບ, ທຸກປະເພດ ຕ້ອງມີກົງຈັກການຈັດຕັ້ງ ແລະ ເຄືອຂ່າຍການປະກັນຄຸນນະພາບພາຍໃນຂອງຕົນເອງ ຊຶ່ງເປັນການຈັດຕັ້ງ ທີ່ມີຄວາມເປັນເອກະລາດທາງດ້ານວິຊາການ ຢູ່ພາຍໃຕ້ການຊີ້ນໍາໂດຍກົງ ຂອງຄະນະຜູ້ບໍລິຫານ ສະຖາບັນການສຶກສາຊັ້ນສູງນັ້ນ ເພື່ອຮັບຜິດຊອບ ກ່ຽວກັບການປະກັນຄຸນນະພາບການສຶກສາ ພາຍໃນສະຖາບັນ”. ລາຍລະອຽດ ການຈັດຕັ້ງໃຫ້ເບິ່ງຕື່ມ ຢູ່ບົດທີ3 ຂອງຄູ່ມືສະບັບນີ້.

(28) ຂະແໜງການສາຍຕັ້ງ ທີ່ຄຸ້ມຄອງ ຫຼື ຮັບຜິດຊອບ ສະຖານການສຶກສານັ້ນໆ ມີໜ້າທີ່ຊີ້ນໍາ, ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດ ວຽກງານການປະກັນຄຸນນະພາບພາຍໃນ. ພ້ອມດຽວກັນ, ກໍ່ມີບົດບາດສໍາຄັນ ໃນການສະໜັບສະໜູນ ແລະ ສະໜອງປັດໄຈຕ່າງໆ ໃຫ້ແກ່ສະຖານການສຶກສາເພື່ອສາມາດພັດທະນາຄຸນນະພາບ ໃຫ້ບັນລຸມາດຕະຖານການສຶກສາແຫ່ງຊາດ.

## 1.5.2 ການປະກັນຄຸນນະພາບພາຍນອກ

(29) ການປະກັນຄຸນນະພາບພາຍນອກ ແມ່ນການຕິດຕາມ, ກວດສອບ ຫຼື ປະເມີນຜົນ ໂດຍອີງການປະກັນຄຸນນະພາບພາຍນອກ; ສູນປະກັນຄຸນນະພາບການສຶກສາ ເປັນເຈົ້າການ ໃນການປະສານງານ ແລະ ດໍາເນີນວຽກງານປະກັນຄຸນນະພາບພາຍນອກ.

(30) ໃນການປະກັນຄຸນນະພາບພາຍນອກ **“ການປະເມີນພາຍນອກ”** ຖືວ່າເປັນວຽກງານທີ່ເປັນພື້ນຖານ ແລະ ສໍາຄັນທີ່ສຸດ; ໃນກົດໝາຍວ່າດ້ວຍອາຊີວະສຶກສາ ມາດຕາ61 ກໍານົດໃຫ້ສະຖານການສຶກສາ ສາຍອາຊີວະສຶກສາໜຶ່ງໆ ຕ້ອງໄດ້ຮັບການປະເມີນພາຍນອກ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ຫ້າປີ. ໂດຍອີງ

ຕາມຫຼັກການດຽວກັນ ສະຖານການສຶກສາ ສາຍການສຶກສາຊັ້ນສູງ ກໍ່ຕ້ອງ ໄດ້ຮັບການປະເມີນພາຍນອກ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ຫ້າປີ ເຊັ່ນດຽວກັນ.

(31) ການປະກັນຄຸນນະພາບພາຍນອກ ມີ 3 ຈຸດປະສົງຫຼັກ ດັ່ງຕໍ່ໄປນີ້:

- **ໃຫ້ເປັນການຕອບສະໜອງ "ພັນທະຊີ້ແຈງ" (Accountability)**
- **ໃຫ້ຄໍາແນະນໍາ ເພື່ອປັບປຸງຄຸນນະພາບ (Improvement)**
- **ໃຫ້ການຮັບຮອງ ເພື່ອສ້າງຄວາມໝັ້ນໃຈ (Accreditation)**

## 1.6 ສາຍພົວພັນ ລະຫວ່າງ ການປະກັນ ແລະ ການປະເມີນ

### 1.6.1 ການປະເມີນຕົນເອງ

(32) ການປະເມີນຕົນເອງ ແມ່ນ ສ່ວນໜຶ່ງ ຂອງກົນໄກການປະກັນພາຍ ໃນ; ເປັນຂະບວນການທີ່ສໍາຄັນ ເພື່ອສະໜອງຂໍ້ມູນຫຼັກຖານ, ຂໍ້ດີ, ຂໍ້ຄົງຄ້າງ ແລະ ຄໍາແນະນໍາ ເພື່ອປັບປຸງຄຸນນະພາບ.

(33) ການປະເມີນຕົນເອງ ເປັນເງື່ອນໄຂພື້ນຖານ ໃຫ້ແກ່ການປະເມີນ ອື່ນໆ; ຖ້າບໍ່ມີ ການປະເມີນຕົນເອງ ແລະ ບົດລາຍງານການປະເມີນຕົນເອງ ກໍ່ ບໍ່ສາມາດ ດໍາເນີນການວຽກງານ ການປະເມີນພາຍໃນ ແລະ ການປະເມີນ ພາຍນອກໄດ້.

(34) ສະຖານການສຶກສາ ຕ້ອງໄດ້ແຕ່ງຕັ້ງ ຄະນະກໍາມະການປະເມີນຕົນເອງ ເພື່ອດໍາເນີນການປະເມີນຕົນເອງ ແລະ ຂຽນບົດລາຍງານການປະເມີນຕົນເອງ ໂດຍມີລາຍລະອຽດ ຢູ່ໃນບົດທີ3 ຂອງຄູ່ມືສະບັບນີ້.

### 1.6.2 ການປະເມີນພາຍໃນ

(35) ການປະເມີນພາຍໃນ ກໍ່ແມ່ນ ສ່ວນໜຶ່ງ ຂອງກົນໄກການປະກັນພາຍ ໃນ; ໂດຍມີຈຸດປະສົງ ເພື່ອຊຸກຍູ້ ແລະ ສົ່ງເສີມວຽກງານປະກັນຄຸນນະພາບ ພາຍໃນແຕ່ລະສະຖານການສຶກສາ ໃຫ້ດໍາເນີນການຢ່າງຕໍ່ເນື່ອງ; ເຮັດໃຫ້

ຂະແໜງການສາຍຕັ້ງ ທີ່ຄຸ້ມຄອງ ຫຼື ຮັບຜິດຊອບ ສະຖານການສຶກສາ ເຫັນໄດ້ເຖິງຂໍ້ດີ ແລະ ຂໍ້ຫຍຸ້ງຍາກຂອງສະຖານການສຶກສາ ເພື່ອນໍາໃຊ້ເປັນບ່ອນອີງ ໃນການສະໜັບສະໜູນ ແລະ ຊຸກຍູ້ ສະຖານການສຶກສາ; ພ້ອມດຽວກັນນັ້ນ ກໍ່ຍັງເປັນການຖອດຖອນບົດຮຽນ ແລະ ຊ່ວຍເຫຼືອ ເຊິ່ງກັນ ແລະ ກັນລະຫວ່າງສະຖານການສຶກສາ ດ້ວຍກັນ.

(36) ວຽກງານການປະກັນຄຸນນະພາບການສຶກສາ ສາຍການສຶກສາຊັ້ນສູງ ຢູ່ ສປປ ລາວ ບໍ່ໄດ້ມີການກໍານົດ ກ່ຽວກັບການປະເມີນພາຍໃນ; ຕາມບົດຮຽນຂອງ ສສ ຫວຽດນາມ ມະຫາວິທະຍາໄລແຫ່ງຊາດ ຈະຈັດຕັ້ງການປະເມີນພາຍໃນ ໃຫ້ແກ່ມະຫາວິທະຍາໄລຍ່ອຍ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

(37) ໃນກົດໝາຍວ່າດ້ວຍອາຊີວະສຶກສາ ມາດຕາ59 ແລະ ມາດຕາ60 ໄດ້ກໍານົດໃຫ້ ສະຖານການສຶກສາ ສາຍອາຊີວະສຶກສາ ຕ້ອງຈັດຕັ້ງການປະເມີນຕົນເອງ ຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ ແລະ ຕ້ອງຮັບການປະເມີນພາຍໃນ ຢ່າງໜ້ອຍໜຶ່ງຄັ້ງຕໍ່ສາມປີ, ສ່ວນຮອບວຽນການປະເມີນ ໃນສາຍການສຶກສາຊັ້ນສູງ ບໍ່ທັນໄດ້ຖືກກໍານົດແຈ້ງ ໃນນິຕິກໍາໃດໆເທື່ອ.

(38) ກະຊວງສຶກສາທິການ ແລະ ກິລາ ມີແຜນສະເໜີຕໍ່ລັດຖະບານ ດໍາລັດວ່າດ້ວຍການປະກັນຄຸນນະພາບການສຶກສາ ຄາດວ່າ ຄົງຈະໄດ້ມີການກໍານົດກ່ຽວກັບຮອບວຽນຂອງການປະເມີນປະເພດຕ່າງໆ ໃຫ້ມີຄວາມຈະແຈ້ງຂຶ້ນຕື່ມ. ສ່ວນລະບຽບການຕ່າງໆ ເພື່ອດໍາເນີນການປະເມີນພາຍໃນ ແລະ ວິທີການຂຽນບົດລາຍງານການປະເມີນພາຍໃນ ໃຫ້ດໍາເນີນເຊັ່ນດຽວກັນກັບການປະເມີນຄຸນນະພາບພາຍນອກ ໂດຍຈະມີລາຍລະອຽດ ຢູ່ໃນປຶ້ມຄູ່ມືການປະກັນຄຸນນະພາບພາຍນອກ ເປັນສະບັບຕ່າງຫາກ.

### 1.6.3 ການປະເມີນພາຍນອກ

(39) ການປະເມີນພາຍນອກ ແມ່ນການປະເມີນໂດຍ ຜູ້ປະເມີນພາຍນອກ ເຊິ່ງເປັນ ພະນັກງານ ແລະ ຄູອາຈານ ຂອງບັນດາອົງການຈັດຕັ້ງພາກລັດ ແລະ

ເອກະຊົນ ທີ່ເປັນສະຖານການສຶກສາ, ກົມກອງ, ລວມທັງອົງການຈັດຕັ້ງທາງສັງຄົມອື່ນໆ ແລະ ເປັນຜູ້ທີ່ມີຄວາມຊໍານານດ້ານການສຶກສາ ແລະ ຂະແໜງວິຊາການຕ່າງໆທີ່ກ່ຽວຂ້ອງ.

(40) ສູນປະກັນຄຸນນະພາບການສຶກສາ ສົມທົບກັບພາກສ່ວນກ່ຽວຂ້ອງ ປະກາດຮັບສະໝັກ ເພື່ອຄັດເລືອກເອົານັກວິຊາການຂະແໜງການຕ່າງໆ ມາຝຶກອົບຮົມ ເພື່ອເປັນຜູ້ປະເມີນພາຍນອກ ໂດຍອີງຕາມບັນດາເງື່ອນໄຂ ແລະ ຂັ້ນຕອນ ທີ່ໄດ້ກໍານົດໄວ້.

(41) ສະຖານການສຶກສາ ທີ່ເປັນເປົ້າໝາຍການປະເມີນພາຍນອກ ແມ່ນສູນປະກັນຄຸນນະພາບການສຶກສາ ຈະຂຶ້ນແຜນດໍາເນີນການປະເມີນພາຍນອກປະຈໍາປີ ແລະ ແຈ້ງໃຫ້ຊາບລ່ວງໜ້າ ເພື່ອກະກຽມຄວາມພ້ອມ ໂດຍສະເພາະແມ່ນບົດລາຍງານການປະເມີນຕົນເອງ ຢ່າງໜ້ອຍ 6 ເດືອນ. ໃນກໍລະນີຂອງສະຖານການສຶກສາ ທີ່ບໍ່ນອນໃນແຜນທີ່ກ່າວມາຂ້າງເທິງ ແຕ່ວ່າ ມີຄວາມພ້ອມ ແລະ ມີຄວາມຕ້ອງການ ຢາກຈະຮັບການປະເມີນພາຍນອກ ກໍ່ສາມາດເຮັດໜັງສືສະເໜີ ເຖິງສູນປະກັນຄຸນນະພາບ ເພື່ອພິຈາລະນາ ແລະ ຈັດສັນເຂົ້າແຜນດໍາເນີນການປະເມີນພາຍນອກ ຕາມຄວາມເໝາະສົມ.

(42) ສູນປະກັນຄຸນນະພາບການສຶກສາ ຈະປະກອບທີມຜູ້ປະເມີນພາຍນອກ ແລະ ປະສານງານ ເພື່ອລົງໄປປະເມີນພາຍນອກ ໃຫ້ແກ່ສະຖານການສຶກສາ, ຈັດສົ່ງໜັງສືແຈ້ງການ ກ່ຽວກັບຜົນການປະເມີນພາຍນອກ ຄືນໃຫ້ແກ່ສະຖານການສຶກສາ ແລະ ອື່ນໆ ຕາມລະບຽບການປະກັນຄຸນນະພາບພາຍນອກ ທີ່ກໍານົດເປັນລະບຽບການສະເພາະ ຕ່າງຫາກ.

(43) ການປະເມີນຕ່າງໆ ສາມາດສັງລວມຫຍໍ້ ເປັນແຜນວາດ ດັ່ງຮູບ1. ລຸ່ມນີ້. ສ່ວນລາຍລະອຽດ ຂອງລະບົບປະກັນຄຸນນະພາບ ໃຫ້ເບິ່ງຕື່ມຢູ່ ຮູບ2.




ຮູບ 1. ແຜນວາດສັງລວມການປະກັນ ແລະ ປະເມີນ

(44) ໃນໄລຍະເວລາຂອງການປະເມີນພາຍໃນ ຫຼື ການປະເມີນພາຍນອກ, ສະຖານການສຶກສາ ຕ້ອງໄດ້ອຳນວຍຄວາມສະດວກ ໃຫ້ຄະນະຜູ້ປະເມີນ ເປັນຕົ້ນແມ່ນຫ້ອງປະຊຸມ, ຫ້ອງເຮັດວຽກ, ສິ່ງອຳນວຍຄວາມສະດວກ ແລະ ເອກະສານ ຂໍ້ມູນຫຼັກຖານຕ່າງໆ; ນັດໝາຍກັບພາກສ່ວນກ່ຽວຂ້ອງ ເພື່ອໃຫ້ຄະນະຜູ້ປະເມີນ ສາມາດສຳພາດ ຄະນະນຳ, ຄູອາຈານ, ພະນັກງານ, ຜູ້ຮຽນຂອງສະຖານການສຶກສາ, ຜູ້ຮຽນຈົບຈາກສະຖານການສຶກສາ ແລະ ສະຖານກອບການທີ່ເປັນເຄືອຂ່າຍ ແລະ ອື່ນໆ ຕາມຄວາມເໝາະສົມ.




ຮູບ 2. ແຜນວາດລວມຂອງລະບົບປະກັນຄຸນນະພາບ

# ບົດທີ2: ມາດຕະຖານຄຸນນະພາບ ສະຖານການສຶກສາ

(45) ກົດໝາຍວ່າດ້ວຍມາດຕະຖານ ມາດຕາ2 ໄດ້ກຳນົດໄວ້ວ່າ "ມາດຕະຖານ ແມ່ນການກຳນົດຄຸນລັກສະນະສະເພາະຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ, ສິ່ງແວດລ້ອມ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບ ມາດຕະຖານ ເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ຈັດລະດັບຄຸນນະພາບຂອງສິ່ງທີ່ກ່າວມານັ້ນ."; ເພາະສະນັ້ນ, ມາດຕະຖານຄຸນນະພາບ ສະຖານການສຶກສາ ຈິ່ງແມ່ນຂໍ້ກຳນົດ ກ່ຽວກັບ "ຄຸນລັກສະນະສະເພາະຂອງສະຖານການສຶກສາ" ເພື່ອໃຫ້ສະຖານການສຶກສາເອງ ນຳໃຊ້ເປັນບ່ອນອີງໃນການປະເມີນຕົນເອງ ແລະ ພັດທະນາຄຸນນະພາບ; ພ້ອມດຽວກັນ ກໍ່ເປັນບ່ອນອີງ ໃນການຕີລາຄາ ແລະ ຈັດລະດັບຄຸນນະພາບ ຂອງສະຖານການສຶກສາ.

(46) ລະດັບຄຸນນະພາບທີ່ນຳໃຊ້ ຢູ່ໃນວຽກງານປະກັນຄຸນນະພາບຂອງ ສປປ ລາວ. ມີຢູ່ 5 ລະດັບ ແລະ ມີຄວາມໝາຍ ດັ່ງຕາຕະລາງ ຕໍ່ໄປນີ້:

ຕາຕະລາງ 3. ລະດັບຄຸນນະພາບ ແລະ ຄວາມໝາຍ

| | | |
|---|---|---|
| 5 | ດີຫຼາຍ<br>Very Good | ໄດ້ເກີນມາດຕະຖານ ແລະ ສາມາດເປັນຕົວແບບ<br>exceeds minimum standards in an outstanding manner |
| 4 | ດີ<br>Good | ໄດ້ເກີນມາດຕະຖານຕ່ຳສຸດກຳນົດ<br>goes beyond minimum requirements |
| 3 | ພໍໃຊ້<br>Fair | ຕອບສະໜອງໄດ້ຕາມມາດຕະຖານຕ່ຳສຸດ<br>meets minimum standards |
| 2 | ອ່ອນ<br>Poor | ບໍ່ທັນໄດ້ຕາມເງື່ອນໄຂ, ຕ້ອງໄດ້ປັບປຸງ<br>needs improvement |
| 1 | ອ່ອນຫຼາຍ<br>Very Poor | ບໍ່ທັນຈັດຕັ້ງປະຕິບັດ, ຕ້ອງໄດ້ປັບປຸງຢ່າງຮີບດ່ວນ<br>non-compliant; must comply with requirement |

(47) ໃນວຽກງານການປະກັນຄຸນນະພາບການສຶກສາ, ມາດຕະຖານໄດ້ຖືກກຳນົດໃສ່ແຕ່ລະວຽກງານທີ່ເປັນປັດໄຈພາໃຫ້ເກີດຄຸນນະພາບ ມີ***<u>ຫົວຂໍ້</u>*** ທີ່ເປັນຄຳນາມ ແລະ ***<u>ຄຳອະທິບາຍ</u>*** ປະກອບໃສ່ແຕ່ລະມາດຕະຖານ ເພື່ອໃຫ້ ຜູ້ຈັດຕັ້ງປະຕິບັດ ມີ***ຄວາມເຂົ້າໃຈເລິກເຊິ່ງ ແລະ ຖືກຕ້ອງ***.

(48) ມາດຕະຖານ ປະກອບດ້ວຍ **<u>ຕົວຊີ້ວັດ</u>**, ບາງເອກະສານ ຍັງເອີ້ນວ່າ ຕົວຊີ້ບອກ ຫຼື ຕົວບົ່ງຊີ້ ເຊິ່ງເປັນຂໍ້ກຳນົດໃນລາຍລະອຽດ ລົງໄປອີກລະດັບໜຶ່ງ ເພື່ອໃຫ້ເຫັນເຖິງ "***ຄວາມຄາດຫວັງ***" ຕໍ່ມາດຕະຖານນັ້ນໆ ຈະແຈ້ງຂຶ້ນຕື່ມ. ເມື່ອສົມທຽບມາດຕະຖານຄຸນນະພາບຂອງ ສປປ ລາວ. ກັບມາດຕະຖານຄຸນນະພາບຂອງປະເທດອື່ນໆ ໃນພາກພື້ນ ແລະ ສາກົນແລ້ວ, ເຫັນວ່າ ມາດຕະຖານຂອງເຮົາ ໄດ້ຄອບຄຸມເອົາບັນດາຫົວຂໍ້ທີ່ເປັນປັດໄຈພື້ນຖານຂອງຄຸນນະພາບແລ້ວ; ແຕ່ວ່າ ຖ້າເບິ່ງລາຍລະອຽດ ລົງໄປເຖິງຕົວຊີ້ວັດ ຈິ່ງເຂົ້າໃຈໄດ້ວ່າ ມາດຕະຖານຂອງເຮົາ ຍັງຢູ່ໃນລະດັບຕ່ຳກວ່າ ທຽບກັບບັນດາປະເທດທີ່ພັດທະນາໄປກ່ອນແລ້ວ, ເຊິ່ງກໍ່ເປັນບັນຫາທີ່ຫຼີກລ້ຽງບໍ່ໄດ້ ເພາະເຮົາຕ້ອງໃຊ້ເວລາໃນການພັດທະນາຕົນເອງ ແລະ ປັບປຸງມາດຕະຖານໃຫ້ສູງຂຶ້ນເທື່ອລະກ້າວ ຈິ່ງຈະສາມາດທຽບເທົ່າກັບໝູ່ ແລະ ກໍ່ບໍ່ມີທາງເວັ້ນ ຫຼື ທາງເລື່ອນອັນໃດ ທີ່ເປີດໂອກາດໃຫ້ເຮົາສວຍໃຊ້ ໄປເຖິງຈຸດນັ້ນໄດ້ງ່າຍໆ.

(49) ຄູ່ມືສະບັບນີ້ ຍັງໄດ້ກຳນົດ ຂໍ້ມູນຫຼັກຖານ, ຄຳຖາມພິຈາລະນາ ແລະ ຂັ້ນຕອນພັດທະນາຕາມຮູບແບບ PDCA (Plan Do Check Act) ຄຽງຄູ່ກັບລະດັບຄຸນນະພາບ ໄວ້ໃນແຕ່ລະມາດຕະຖານ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ການປະເມີນ; ຖ້າຫາກສາມາດ ຕອບຄຳຖາມ ຫຼື ອະທິບາຍສິ່ງທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຜ່ານມາ ກໍ່ສາມາດ ຕີລາຄາຄຸນນະພາບ ໄປພ້ອມໆກັນ.

## ມາດຕະຖານ I: ວິໄສທັດ, ພາລະກິດ ແລະ ຈຸດໝາຍ

(50) ສະຖານການສຶກສາ ຕ້ອງກຳນົດວິໄສທັດ, ພາລະກິດ ແລະ ຈຸດໝາຍ ຂອງຕົນໃຫ້ຊັດເຈນ ເປັນແນວທາງພື້ນຖານໃນການພັດທະນາ; ມີເອກະສານ ເປັນລາຍລັກອັກສອນ, ພ້ອມທັງຈັດຕັ້ງການເຜີຍແຜ່ໃນຫຼາຍຮູບແບບເພື່ອ ຮັບປະກັນໃຫ້ຄູອາຈານ, ພະນັກງານ, ຜູ້ຮຽນ ຫຼື ຜູ້ທີ່ສົນໃຈຮັບຮູ້ ແລະ ສາມາດເຂົ້າເຖິງຂໍ້ມູນໄດ້ເຊັ່ນ: ການປະຖົມນິເທດ, ການແຈກຢາຍແຜ່ນພັບ, ການກຳນົດເປັນຄຳຂວັນເພື່ອໃຫ້ຈື່ງ່າຍ, ການຕິດປ້າຍໂຄສະນາ, ການສ້າງ ເວັບໄຊ ແລະ ເຄື່ອງມືສື່ສານອື່ນໆ.

(51) ເນື້ອໃນຂອງວິໄສທັດ, ພາລະກິດ ແລະ ຈຸດໝາຍ ຕ້ອງອີງໃສ່ ນະໂຍບາຍ ແລະ ຂໍ້ມູນຫຼັກຖານ ທີ່ສະແດງເຖິງຄວາມຮຽກຮ້ອງຕ້ອງການ ຂອງຕະຫຼາດແຮງງານ, ຂະແໜງການສະເພາະ, ແຜນພັດທະນາເສດຖະກິດ-ສັງຄົມຕົວຈິງຂອງປະເທດ, ແລະ ຄວາມຈຳເປັນໃນການເຊື່ອມໂຍງກັບພາກ ພື້ນ ແລະ ສາກົນ.

(52) ວິໄສທັດ, ພາລະກິດ ແລະ ຈຸດໝາຍ ບໍ່ແມ່ນຂໍ້ກຳນົດຕາຍຕົວ; ມັນ ຕ້ອງຖືກປັບດັດໃຫ້ທັນສະພາບການ ແລະ ຍຸກສະໄໝ, ສະຖານການສຶກສາ ຕ້ອງມີແຜນການ ແລະ ກົນໄກ ໃນການທົບທວນ ຢ່າງເປັນປົກກະຕິ ຖ້າພົບ ເຫັນຈຸດໃດ ບໍ່ສອດຄ່ອງ ບໍ່ແທດເໝາະ ກໍ່ຕ້ອງປັບປຸງຕາມຄວາມເໝາະສົມ.

| ຕົວຊີ້ວັດ |
|---|
| (01) ວິໄສທັດ, ພາລະກິດ ແລະ ຈຸດໝາຍ ຖືກກຳນົດຢ່າງຈະແຈ້ງ ແລະ ທຸກພາກສ່ວນໄດ້ຮັບຮູ້.<br>(02) ຈຸດໝາຍ ສອດຄ່ອງກັບພາລະກິດ, ແທດເໝາະກັບທ່າແຮງ ແລະ ທິດທາງການພັດທະນາຂອງສະຖານການສຶກສາ, ຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການ ໃນການພັດທະນາ ປະເທດຊາດ, ທ້ອງຖິ່ນ, ຂະແໜງການ ແລະ ການເຊື່ອມໂຍງພາກພື້ນ ແລະ ສາກົນ. |

<table>
<tr><td colspan="3">(03) ວິໄສທັດ, ພາລະກິດ ແລະ ຈຸດໝາຍ ໄດ້ຮັບການທົບທວນ ແລະ ປັບປຸງເປັນແຕ່ລະໄລຍະ.</td></tr>
<tr><td colspan="3">ຂໍ້ມູນຫຼັກຖານ</td></tr>
<tr><td colspan="3">✓ ເອກະສານ/ຂໍ້ຄວາມ ກ່ຽວກັບວິໄສທັດ, ພາລະກິດ ແລະ ຈຸດໝາຍ<br>✓ ບົດບັນທຶກກອງປະຊຸມພັດທະນາວິໄສທັດ, ພາລະກິດ ແລະ ຈຸດໝາຍ<br>✓ ລາຍການ ແລະ ຕົວຢ່າງຂອງເຄື່ອງມືປະຊາສຳພັນເຊັ່ນ: ປ້າຍຄຳຂວັນ, ແຜ່ນພັບ, ເວັບໄຊ ແລະ ອື່ນໆ<br>✓ ແຜນການ ແລະ ວິທີການເຜີຍແຜ່ ວິໄສທັດ, ພາລະກິດ ແລະ ຈຸດໝາຍ<br>✓ ຂໍ້ມູນສະຖິຕິ ຜົນສຳເລັດຂອງແຕ່ລະສາຂາວິຊາ ໃນໄລຍະທີ່ຜ່ານມາ ແລະ ແຜນການຮັບຜູ້ຮຽນ<br>✓ ເອກະສານ ຫຼື ຂໍ້ມູນຕ່າງໆທີ່ຢັ້ງຢືນເຖິງຄວາມສອດຄ່ອງຂອງວິໄສທັດ, ພາລະກິດ ແລະ ຈຸດໝາຍ<br>✓ ກົນໄກ ແລະ ແຜນການທົບທວນວິໄສທັດ, ພາລະກິດ ແລະ ຈຸດໝາຍ</td></tr>
<tr><td>ຄຳຖາມພິຈາລະນາ</td><td>ຂັ້ນຕອນ</td><td>ລະດັບ</td></tr>
<tr><td>Q-01 ເຫດຜົນ ໃນການສ້າງຕັ້ງ ແມ່ນຫຍັງ?</td><td>Plan</td><td rowspan="4">1-2</td></tr>
<tr><td>Q-02 ບ່ອນອີງ ໃນການກຳນົດ ວິໄສທັດ, ພາລະກິດ ແລະ ຈຸດໝາຍ ແມ່ນຫຍັງ?</td><td>Plan</td></tr>
<tr><td>Q-03 ຜູ້ມີສ່ວນຮ່ວມ ໃນການກຳນົດ ມີໃຜແດ່?</td><td>Do</td></tr>
<tr><td>Q-04 ວິທີການກຳນົດ ເຮັດແນວໃດ? ເມື່ອໃດ?</td><td>Do</td></tr>
<tr><td>Q-05 ກຳນົດໃນເອກະສານ ອັນໃດ?</td><td>Do</td><td rowspan="2">3</td></tr>
<tr><td>Q-06 ເຄື່ອງມືເຜີຍແຜ່ ມີຫຍັງແດ່? ຮູບແບບ? ເມື່ອໃດ? ໃຫ້ໃຜ?</td><td>Do</td></tr>
<tr><td>Q-07 ດຳເນີນການສຳຫຼວດຄວາມຮັບຮູ້ ເຮັດແນວໃດ?</td><td>Check</td><td rowspan="2">4</td></tr>
<tr><td>Q-08 ວິໄສທັດ, ພາລະກິດ ແລະ ຈຸດໝາຍ ມີຄວາມສອດຄ່ອງຄືແນວໃດ?</td><td>Check</td></tr>
<tr><td>Q-09 ແຜນການ ທົບທວນຄືນ ມີຄືແນວໃດ?</td><td>Act</td><td rowspan="2">5</td></tr>
<tr><td>Q-10 ວິທີການທົບທວນຄືນ ແລະ ປັບປຸງ ມີຄືແນວໃດ?</td><td>Act</td></tr>
</table>

## ມາດຕະຖານII: ການຄຸ້ມຄອງ

(53) ສະຖານການສຶກສາ ແມ່ນອົງກອນ, ການຈັດຕັ້ງ ຫຼື ນິຕິບຸກຄົນ, ລະບົບການຄຸ້ມຄອງທີ່ດີ ສາມາດເຮັດໃຫ້ສະຖານການສຶກສາບັນລຸ ວິໄສທັດ, ພາລະກິດ ແລະ ຈຸດໝາຍຂອງຕົນໄດ້. ໃນນັ້ນ, ສະພາບໍລິຫານ ມີບົດບາດ ແລະ ຄວາມຮັບຜິດຊອບສູງ ໃນການຊີ້ນຳວຽກງານການຄຸ້ມຄອງ.

(54) ກົນໄກການຄຸ້ມຄອງທີ່ດີ ແລະ ຍືນຍົງ ຕ້ອງສະແດງໃຫ້ເຫັນໄດ້ເຖິງ: (1) ໂຄງຮ່າງການຈັດຕັ້ງທີ່ຈະແຈ້ງ, (2) ການບັນຈຸພະນັກງານທີ່ມີວຸດທິ ແລະ ຄວາມສາມາດທີ່ເໝາະສົມເຂົ້າໃນຕຳແໜ່ງງານທີ່ກຳນົດຂຶ້ນ, (3) ມີແຜນຍຸດທະສາດ, ແຜນພັດທະນາແຕ່ລະໄລຍະ ທີ່ສອດຄ່ອງກັບວິໄສທັດ, ພາລະກິດ ແລະ ຈຸດໝາຍທີ່ໄດ້ກຳນົດໄວ້; ພ້ອມດຽວກັນ ການບໍລິຫານຄຸ້ມຄອງ ຕ້ອງດຳເນີນໄປ ພາຍໃຕ້ນະໂຍບາຍ, ລະບຽບການ ແລະ ຂັ້ນຕອນທີ່ຈະແຈ້ງ, ການເງິນ ມີຄວາມໂປ່ງໃສ, ຍືນຍົງ ແລະ ໝັ້ນຄົງ.

| ຕົວຊີ້ວັດ |
|---|
| (04) ສະພາບໍລິຫານມີບົດບາດ ແລະ ປະຕິບັດໜ້າທີ່ຮັບຜິດຊອບທີ່ໄດ້ກຳນົດໄວ້ ໂດຍສອດຄ່ອງກັບບັນດາດຳລັດ ແລະ ລະບຽບການທີ່ມີຢູ່.<br>(05) ມີໂຄງຮ່າງການຈັດຕັ້ງຈະແຈ້ງ; ບັນຈຸພະນັກງານທີ່ມີວຸດທິເໝາະສົມ ແລະ ມີຄວາມສາມາດເຂົ້າໃນທຸກຕຳແໜ່ງງານທີ່ຖືກສ້າງຕັ້ງຂຶ້ນ.<br>(06) ມີແຜນຍຸດທະສາດ/ແຜນພັດທະນາ ແລະ ແຜນຈັດຕັ້ງປະຕິບັດ ໃນແຕ່ລະໄລຍະສອດຄ່ອງກັບວິໄສທັດ, ພາລະກິດ ແລະ ຈຸດໝາຍທີ່ໄດ້ກຳນົດໄວ້.<br>(07) ມີນະໂຍບາຍ, ລະບຽບການ ແລະ ຂັ້ນຕອນ ຄຸ້ມຄອງ-ບໍລິຫານທີ່ຈະແຈ້ງ.<br>(08) ມີນະໂຍບາຍ, ລະບຽບການ ແລະ ຂັ້ນຕອນ ບໍລິຫານການເງິນທີ່ໂປ່ງໃສ.<br>(09) ມີສະຖານະດ້ານການເງິນທີ່ຍືນຍົງ ແລະ ໝັ້ນຄົງ. |
| ຂໍ້ມູນຫຼັກຖານ |
| ✓ ຂໍ້ກຳນົດກ່ຽວກັບ ທີ່ຕັ້ງ, ບົດບາດ, ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ<br>✓ ຂໍ້ກຳນົດກ່ຽວກັບ ເງື່ອນໄຂ, ວິທີການຄັດເລືອກ ແລະ ການແຕ່ງຕັ້ງ<br>✓ ຂໍ້ຕົກລົງແຕ່ງຕັ້ງ ຫຼື ລາຍຊື່ຂອງສະມາຊິກສະພາບໍລິຫານ |

| | | |
|---|---|---|
| ✓ ແຜນການ, ບົດບັນທຶກ ຫຼື ບົດສະຫຼຸບການເຄື່ອນໄຫວຂອງ ສະພາບໍລິຫານ<br>✓ ໂຄງຮ່າງການຈັດຕັ້ງ (ຕໍາແໜ່ງ, ຊື່ ແລະ ນາມສະກຸນ, ວຸດທິ, ປະສົບການ, ຄວາມຮັບຜິດຊອບ ແລະ ອື່ນໆ)<br>✓ ແຜນຍຸດທະສາດ, ແຜນພັດທະນາໄລຍະສັ້ນ/ໄລຍະຍາວ, ແຜນພັດທະນາປະຈໍາປີ ຫຼື ແຜນດໍາເນີນງານ<br>✓ ກົນໄກໃນການຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນ<br>✓ ລະບຽບການບໍລິຫານຄຸ້ມຄອງ, ຄູ່ມືວິທີການເຮັດວຽກ<br>✓ ແຜນງົບປະມານ, ແຜນສ້າງລາຍຮັບວິຊາການ ແລະ ແຜນອື່ນໆທີ່ກ່ຽວພັນກັບງົບປະມານ<br>✓ ບົດສະຫຼຸບ ການຈັດຕັ້ງປະຕິບັດແຜນງົບປະມານ, ບົດລາຍງານ ການກວດສອບບັນຊີ/ການເງິນ | | |
| ຄໍາຖາມພິຈາລະນາ | ຂັ້ນຕອນ | ລະດັບ |
| *Q-11 ບ່ອນອີງ ໃນການແຕ່ງຕັ້ງ ແລະ ກໍານົດພາລະບົດບາດ ຕ່າງໆ ແມ່ນຫຍັງ?* | Plan | 1-2 |
| *Q-12 ບ່ອນອີງ ໃນການກໍານົດແຜນຍຸດທະສາດ ແລະ ແຜນການຕ່າງໆ ແມ່ນຫຍັງ?* | Plan | |
| *Q-13 ສະພາຕ່າງໆ ໄດ້ເຄື່ອນໄຫວ ຄືແນວໃດ?* | Do | |
| *Q-14 ໂຄງຮ່າງການຈັດຕັ້ງ ແລະ ການບັນຈຸພະນັກງານ ເໝາະສົມ ຄືແນວໃດ?* | Do | |
| *Q-15 ແຜນຍຸດທະສາດ ແລະ ແຜນການຕ່າງໆ ມີຫຍັງແດ່? ຖືກຈັດຕັ້ງ ຄືແນວໃດ?* | Do | 3 |
| *Q-16 ການຈັດຕັ້ງປະຕິບັດ ແລະ ນໍາໃຊ້ງົບປະມານ ມີຜົນໄດ້ຮັບ ຄືແນວໃດ?* | Do | |
| *Q-17 ການຄຸ້ມຄອງ ມີຄວາມເຂັ້ມແຂງ ຄືແນວໃດ?* | Check | 4 |
| *Q-18 ການຈັດຕັ້ງປະຕິບັດ ແຜນຍຸດທະສາດ ຕ່າງໆ ສອດຄ່ອງ ຄືແນວໃດ?* | Check | |
| *Q-19 ການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຕ່າງໆ ຖືກທົບທວນ ແລະ ປັບປຸງ ຄືແນວໃດ?* | Act | 5 |

## ມາດຕະຖານIII: ບຸກຄະລາກອນ

(55) ການຄັດເລືອກ, ການບັນຈຸ, ການສັບຊ້ອນ, ການຄຸ້ມຄອງ, ການຮັກສາ ແລະ ການພັດທະນາພະນັກງານ, ຄູ-ອາຈານມີຄວາມສຳຄັນຢ່າງຍິ່ງຕໍ່ທຸກໆສະຖານການສຶກສາ. ຄຸນນະພາບຂອງການສຶກສາເວົ້າລວມ ຫຼື ຄຸນນະພາບຂອງການສິດສອນ ເວົ້າສະເພາະ ແມ່ນເປັນໜ້າທີ່ຄວາມຮັບຜິດຊອບຫຼັກຂອງຄູ-ອາຈານ. ພະນັກງານຄູອາຈານ ຕ້ອງມີວຸດທິການສຶກສາ, ຄວາມຮູ້-ຄວາມສາມາດ, ປະສົບການທາງດ້ານວິຊາສະເພາະທີ່ເໝາະສົມ.

(56) ອັດຕາສ່ວນຄູອາຈານສອນປະຈຳ ຕ້ອງມີພຽງພໍເພື່ອຮັບປະກັນການສິດສອນ ແລະ ການໃຫ້ຄຳແນະນຳທີ່ມີປະສິດທິພາບແກ່ນັກສຶກສາ. ຄູອາຈານ ຕ້ອງໄດ້ຮັບການມອບໝາຍວຽກງານສິດສອນ ໃນຂະແໜງວິຊາສະເພາະຂອງພວກເຂົາເຈົ້າ. ສະຖາບັນການສຶກສາ ຕ້ອງມີລະບຽບອັນແນ່ນອນ ແລະ ຈະແຈ້ງ ກ່ຽວກັບ ການສັບຊ້ອນຕຳແໜ່ງງານ ແລະ ການເລື່ອນຊັ້ນ-ຂັ້ນ. ພ້ອມທັງ ຕ້ອງມີລະບົບ ແລະ ກົນໄກ ໃນການປະເມີນຄຸນນະພາບບຸກຄະລາກອນຂອງຕົນ ໂດຍເນັ້ນໜັກທີ່ຜົນຜະລິດ/ຜົນໄດ້ຮັບຂອງການຈັດ ຕັ້ງປະຕິບັດ, ພ້ອມທັງມີການຊຸກຍູ້ ແລະ ສົ່ງເສີມ ເພື່ອສ້າງຄວາມກະຕືລືລົ້ນໃຫ້ບຸກຄະລາກອນໃນການພັດທະນາຕົນເອງຢ່າງຕໍ່ເນື່ອງ.

| ຕົວຊີ້ວັດ |
|---|
| (10) ມີກົນໄກການຄັດເລືອກ, ບັນຈຸ ແລະ ສັບຊ້ອນ ບຸກຄະລາກອນທີ່ຈະແຈ້ງ; ສອດຄ່ອງຕາມຄວາມຕ້ອງການ ແລະ ແຜນພັດທະນາຂອງຕົນ. |
| (11) ອາຈານສອນມີວຸດທິ ແລະ ຄວາມສາມາດ ເໝາະສົມ ຕາມມາດຕະຖານຫຼັກສູດການສຶກສາແຫ່ງຊາດ. |
| (12) ອາຈານສອນ ມີຄວາມສາມາດໃນການຖ່າຍທອດຄວາມຮູ້ຄວາມສາມາດຕາມຫຼັກສູດຢ່າງເຂັ້ມງວດ. |
| (13) ຈຳນວນອາຈານສອນຕ້ອງພຽງພໍ ໃນການຈັດຕັ້ງປະຕິບັດຫຼັກສູດ ແລະ ສອດຄ່ອງກັບຈຳນວນນັກສຶກສາ. |

<table>
<tr><td colspan="3">(14) ອາຈານທີ່ປຶກສາການຂຽນບົດ ຕ້ອງເໝາະສົມທາງດ້ານຄຸນນະພາບ ແລະ ປະລິມານ.<br>(15) ມີການກຳນົດໜ້າວຽກໃຫ້ພະນັກງານຕາມຕຳແໜ່ງງານຢ່າງຈະແຈ້ງ.<br>(16) ມີລະບົບປະເມີນຜົນການສອນຂອງຄູອາຈານ ທີ່ເໝາະສົມ.<br>(17) ມີແຜນພັດທະນາບຸກຄະລາກອນທີ່ຈະແຈ້ງ.</td></tr>
<tr><td colspan="3">ຂໍ້ມູນຫຼັກຖານ</td></tr>
<tr><td colspan="3">✓ ແຜນຄວາມຕ້ອງການ ແລະ ແຜນພັດທະນາບຸກຄະລາກອນ<br>✓ ລະບຽບການ ກ່ຽວກັບການບັນຈຸ ແລະ ສັບຊ້ອນ (ຂັ້ນຕອນ, ເງື່ອນໄຂ)<br>✓ ສະຖິຕິຈຳນວນຄູ-ອາຈານ, ຜູ້ຮຽນ ແລະ ຈຳນວນຫ້ອງຮຽນ (ສະເລ່ຍທັງໝົດ ແລະ ແຍກຕາມຫຼັກສູດ)<br>✓ ລາຍຊື່ຄູ-ອາຈານ, ອາຍຸ, ວຸດທິ, ວິຊາ, ສະຖານການສຶກສາທີ່ຈົບ, ປີການ, ວິຊາສອນ ແລະ ຊົ່ວໂມງສອນ<br>✓ ອັດຕາສ່ວນ ຄູອາຈານ/ຜູ້ຮຽນ, ຄູປະຈຳ/ຄູຮັບເຊີນ, ຊັດສ່ວນຂອງວຸດທິ<br>✓ ກົນໄກ, ຂັ້ນຕອນ, ເຄື່ອງມື ແລະ ບົດສະຫຼຸບ ການປະເມີນ ບຸກຄະລາກອນ<br>✓ ກົນໄກໃນການຊຸກຍູ້ ແລະ ສົ່ງເສີມການພັດທະນາບຸກຄະລາກອນ</td></tr>
<tr><td>ຄຳຖາມ ພິຈາລະນາ</td><td>ຂັ້ນຕອນ</td><td>ລະດັບ</td></tr>
<tr><td>Q-20 ບ່ອນອີງ ເພື່ອວິເຄາະຄວາມຕ້ອງການ ດ້ານບຸກຄະລາກອນ ແມ່ນຫຍັງ?</td><td>Plan</td><td rowspan="4">1-2</td></tr>
<tr><td>Q-21 ວິທີການຄັດເລືອກ, ບັນຈຸ ແລະ ສັບຊ້ອນ ບຸກຄະລາກອນ ເປັນຄືແນວໃດ?</td><td>Plan</td></tr>
<tr><td>Q-22 ຄູປະຈຳຫຼັກສູດ ມີຄວາມເໝາະສົມ ຄືແນວໃດ?</td><td>Do</td></tr>
<tr><td>Q-23 ອັດຕາສ່ວນ ຄູສອນ/ຜູ້ຮຽນ ໃນແຕ່ລະຫຼັກສູດ ສອດຄ່ອງ ຄືແນວໃດ?</td><td>Do</td></tr>
<tr><td>Q-24 ວຸດທິ ແລະ ປະສົບການ ຂອງບຸກຄະລາກອນ ສອດຄ່ອງ ຄືແນວໃດ?</td><td>Do</td><td rowspan="2">3</td></tr>
<tr><td>Q-25 ອັດຕາສ່ວນ ຄູສອນປະຈຳ/ຮັບເຊີນ ສອດຄ່ອງ ຄືແນວໃດ?</td><td>Do</td></tr>
</table>

| | | |
|---|---|---|
| *Q-26 ເຄື່ອງມືປະເມີນບຸກຄະລາກອນ ມີຄືແນວໃດ? ດຳເນີນການແນວໃດ?* | Check | 4 |
| *Q-27 ການປະເມີນບຸກຄະລາກອນ ມີຄວາມສອດຄ່ອງ ຄືແນວໃດ?* | Check | |
| *Q-28 ຜົນການປະເມີນ ຖືກນຳໃຊ້ເຂົ້າໃນການພັດທະນາ ບຸກຄະລາກອນ ຄືແນວໃດ?* | Act | 5 |
| *Q-29 ການຊຸກຍູ້ ແລະ ສົ່ງເສີມ ການພັດທະນາ ບຸກຄະລາກອນ ເປັນຄືແນວໃດ?* | Act | |

## ມາດຕະຖານIV: ຫຼັກສູດ

(57) ການພັດທະນາຫຼັກສູດ ຕ້ອງສະແດງໃຫ້ເຫັນຈຸດປະສົງຢ່າງຈະແຈ້ງ ພາຍຫຼັງສຳເລັດຫຼັກສູດນັ້ນ ຜູ້ຮຽນຈະມີຄວາມຮູ້ຄວາມສາມາດຄືແນວໃດ. ຫຼັກສູດຕ້ອງສອດຄ່ອງກັບຂອບວຸດທິແຫ່ງຊາດ; ຕ້ອງສົ່ງເສີມຜູ້ຮຽນໄດ້ຮຽນຮູ້ພາສາຕ່າງປະເທດໃດໜຶ່ງ, ໄດ້ຝຶກທັກສະທາງດ້ານຄອມພິວເຕີໂດຍສະເພາະການຄົ້ນຫາຂໍ້ມູນຂ່າວສານ, ໄດ້ຄົ້ນຄິດດ້ວຍຕົນເອງ, ໄດ້ສະແດງຄວາມຄິດເຫັນ, ມັກການຮຽນຮູ້ເຊິ່ງເປັນພື້ນຖານໃຫ້ແກ່ການຮຽນຮູ້ຕະ ຫຼອດຊີວິດ.

(58) ເນື່ອງຈາກວ່າ ຄວາມຕ້ອງການຂອງຕະຫຼາດແຮງງານມີການປ່ຽນແປງຕະຫຼອດເວລາ, ສະຖານການສຶກສາຕ້ອງມີການທົບທວນ ແລະ ປັບປຸງຫຼັກສູດໃຫ້ສອດຄ່ອງກັບສະພາບທ້ອງຖິ່ນ ແລະ ຕະຫຼາດແຮງງານເປັນແຕ່ລະໄລຍະ.

| ຕົວຊີ້ວັດ |
|---|
| (18) ສະຖານການສຶກສາຊັ້ນສູງ ມີລະບົບພັດທະນາຫຼັກສູດທີ່ເໝາະສົມ. |
| (19) ຫຼັກສູດ ໄດ້ກຳນົດຜົນການຮຽນຮູ້ຢ່າງຈະແຈ້ງ ສອດຄ່ອງກັບຂອບວຸດທິແຫ່ງຊາດ. |
| (20) ຫຼັກສູດ ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ, ຕະຫຼາດແຮງງານ ແລະ ການພັດທະນາຊັບພະຍາກອນມະນຸດຂອງປະເທດ. |

<table>
<tr><td colspan="3">(21) ຫຼັກສູດ ມີເນື້ອໃນສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ຕົວຢ່າງເຊັ່ນ: ພາສາຕ່າງປະເທດ, ທັກສະໃນການຊອກຄົ້ນຂໍ້ມູນຂ່າວສານ, ການຄົ້ນຄິດດ້ວຍຕົນເອງ, ການສະແດງແນວຄິດ ແລະ ມີຄວາມມັກໃນການຮຽນຮູ້.<br>(22) ຫຼັກສູດ ຖືກທົບທວນ ໂດຍການມີສ່ວນຮ່ວມທັງ ພາຍໃນ ແລະ ພາຍນອກຢ່າງເປັນປົກກະຕິ.</td></tr>
<tr><td colspan="3">ຂໍ້ມູນຫຼັກຖານ</td></tr>
<tr><td colspan="3">✓ ບັນຊີລາຍຊື່ຂອງຫຼັກສູດທີ່ຈັດຕັ້ງປະຕິບັດ, ລະດັບຂອງຫຼັກສູດ, ສົກທີ່ເປີດສອນ, ຂໍ້ຕົກລົງອະນຸມັດ<br>✓ ຂໍ້ຕົກລົງແຕ່ງຕັ້ງຄະນະພັດທະນາ/ຮັບຜິດຊອບ ຫຼັກສູດ ຫຼື ໜ່ວຍງານ<br>✓ ກົນໄກ, ຂັ້ນຕອນ ແລະ ບ່ອນອີງ ໃນການພັດທະນາຫຼັກສູດ<br>✓ ລາຍວິຊາ ຫຼື ສະມັດຖະພາບ, ໜ່ວຍກິດ ຫຼື ໂມດູນ, ສ່ວນຮ້ອຍຂອງທິດສະດີ, ປະຕິບັດ ແລະ ເຝິກງານ<br>✓ ບົດວິເຄາະ ຄວາມຕ້ອງການແຮງງານ ຕາມແຜນພັດທະນາເສດຖະກິດ-ສັງຄົມ<br>✓ ອັດຕາສ່ວນມີວຽກເຮັດງານທຳຂອງຜູ້ຮຽນທີ່ຈົບໄປ, ຂໍ້ຫຍຸ້ງຍາກ/ຂໍ້ສະດວກຂອງຜູ້ຮຽນທີ່ຈົບໄປ<br>✓ ກົນໄກ, ຂັ້ນຕອນ ແລະ ວິທີການທົບທວນ ຫຼື ປະເມີນຫຼັກສູດ</td></tr>
<tr><td>ຄຳຖາມ ພິຈາລະນາ</td><td>ຂັ້ນຕອນ</td><td>ລະດັບ</td></tr>
<tr><td>Q-30 ລະບົບການພັດທະນາຫຼັກສູດ ມີຄວາມສອດຄ່ອງຄືແນວໃດ?</td><td>Plan</td><td rowspan="4">1-2</td></tr>
<tr><td>Q-31 ບ່ອນອີງ ຫຼື ຄວາມຈຳເປັນ ຂອງແຕ່ລະຫຼັກສູດມີຄືແນວໃດ?</td><td>Plan</td></tr>
<tr><td>Q-32 ຫຼັກສູດຕ່າງໆ ມີລາຍລະອຽດ ຄົບຖ້ວນ ແລະຈະແຈ້ງ ຄືແນວໃດ?</td><td>Do</td></tr>
<tr><td>Q-33 ອັດຕາສ່ວນ ທິດສະດີ/ປະຕິບັດຕົວຈິງ ເໝາະສົມ ຄືແນວໃດ? (ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ)</td><td>Do</td></tr>
<tr><td>Q-34 ບ່ອນອີງ ທີ່ອ້າງເຖິງຄວາມຕ້ອງການແຮງງານ ມີຄືແນວໃດ?</td><td>Do</td><td>3</td></tr>
</table>

| | | |
|---|---|---|
| *Q-35 ຫຼັກສູດຕ່າງໆ ມີຄວາມສອດຄ່ອງ ຄືແນວໃດ?* | Do | |
| *Q-36 ກົນໄກຕິດຕາມ ການມີວຽກເຮັດງານທຳ ຂອງຜູ້ຮຽນຈົບ ມີຄືແນວໃດ?* | Check | 4 |
| *Q-37 ສະຖານປະກອບການ, ຜູ້ຈົບ, ຜູ້ຮຽນ, ຄູ-ອາຈານ ແລະ ອື່ນໆ ມີສ່ວນຮ່ວມໃນການທົບທວນ (ລວມທັງການປະເມີນ) ຫຼັກສູດ ຄືແນວໃດ?* | Act | 5 |

## ມາດຕະຖານV: ປະສິດທິຜົນການຮຽນ-ການສອນ

(59) ສະຖານການສຶກສາ ຕ້ອງຈັດຕັ້ງປະຕິບັດ ການຮຽນ-ການສອນຕາມຫຼັກສູດຢ່າງເຂັ້ມງວດ ໃຫ້ສອດຄ່ອງກັບວິໄສທັດ, ພາລະກິດ ແລະ ຈຸດໝາຍ. ເຜີຍແຜ່ລາຍວິຊາຮຽນທັງໝົດຫຼັກສູດ, ລາຍວິຊາໃນແຕ່ລະພາກຮຽນເພື່ອໃຫ້ຜູ້ຮຽນຮັບຮູ້ ແລະ ກຽມຄວາມພ້ອມໃນການຮ່ຳຮຽນ. ມີການຜັນຂະຫຍາຍນະໂຍບາຍ 3 ລັກສະນະ ແລະ 5 ຫຼັກມູນການສຶກສາເຂົ້າໃນການຈັດຕັ້ງປະຕິບັດຫຼັກສູດ ເນັ້ນໜັກໃຫ້ມີຜົນໄດ້ຮັບ ຢູ່ກັບຜູ້ຮຽນຢ່າງເປັນຮູບປະທຳ.

(60) ສະຖານການສຶກສາ ຕ້ອງສົ່ງເສີມການນຳໃຊ້ເຕັກໂນໂລຊີ, ສື່ປະເພດຕ່າງໆ ແລະ ຮູບແບບເອົານັກສຶກສາເປັນໃຈກາງທີ່ມີລັກສະນະດຶງດູດສ້າງຄວາມກະຕືລືລົ້ນ ຊ່ວຍສົ່ງເສີມການພັດທະນາຄວາມຮູ້ ແລະ ຄວາມສາມາດຂອງຜູ້ຮຽນ; ຈັດສັນອຸປະກອນ, ເຄື່ອງມື/ເຄື່ອງຈັກ ແລະ ວັດສະດຸຕ່າງໆໃນພາກປະຕິບັດຕົວຈິງຢ່າງເໝາະສົມ; ພ້ອມທັງຮັບປະກັນກິດຈະກຳການລົງເຝິກງານ, ສະຖານທີ່ເຝິກງານຕອບສະໜອງຈຸດປະສົງຂອງການພັດທະນາຄວາມຮູ້ ແລະ ຄວາມສາມາດຂອງຜູ້ຮຽນຢ່າງແທ້ຈິງ.

(61) ສະຖານການສຶກສາ ຕ້ອງມີລະບົບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດການຮຽນ-ການສອນ ແລະ/ຫຼື ລະບົບການປະເມີນຄຸນນະພາບຂອງຜູ້ຮຽນ ທີ່ເໝາະສົມເພື່ອຮັບປະກັນຄຸນນະພາບຂອງຜູ້ຮຽນ.

| ຕົວຊີ້ວັດ | | |
|---|---|---|
| (23) ສະຖານການສຶກສາ ມີກົນໄກເພື່ອຕິດຕາມການຮຽນ-ການສອນ ແລະ ຮັບຟັງຄໍາຄິດເຫັນຈາກພາກສ່ວນຕ່າງໆ ກ່ຽວກັບປະສິດທິຜົນຂອງການຮຽນ-ການສອນ.<br>(24) ການຮຽນ-ການສອນ ນໍາໃຊ້ ເຕັກໂນໂລຊີ, ສື່ຕ່າງໆ ແລະ ຮູບແບບເອົານັກສຶກສາເປັນໃຈກາງ.<br>(25) ມີການຈັດສັນສະຖານທີ່ການລົງເຝິກງານຂອງນັກສຶກສາ ຢ່າງເໝາະສົມ ແລະ ພຽງພໍ. | | |
| ຂໍ້ມູນຫຼັກຖານ | | |
| ✓ ປະຕິທິນການສຶກສາ, ຕາຕະລາງການຮຽນ-ການສອນ, ແຜນການສອນ, ຊຸດການສອນ<br>✓ ນະໂຍບາຍ, ກົນໄກ, ຂັ້ນຕອນ ແລະ ວິທີການອື່ນໆ ທີ່ສົ່ງເສີມ **3** ລັກສະນະ ແລະ **5** ຫຼັກມູນການສຶກສາ<br>✓ ແຜນຜັງ/ແຜນວາດ ສະຖານທີ່ ແລະ ສິ່ງອໍານວຍຄວາມສະດວກ ສໍາລັບການຮຽນການສອນ<br>✓ ລາຍຊື່ ອຸປະກອນ/ສື່ ການຮຽນການສອນ<br>✓ ລາຍຊື່ ເຄື່ອງມື, ເຄື່ອງຈັກ ແລະ ວັດສະດຸ ເພື່ອປະຕິບັດຕົວຈິງ<br>✓ ລາຍຊື່ ສະຖານທີ່ເຝິກງານ, ບົດບັນທຶກຊ່ວຍຈໍາ/ສັນຍາ ການຮ່ວມມືກັບສະຖານປະກອບການ<br>✓ ກົນໄກ, ຂັ້ນຕອນ, ວິທີການ/ເຄື່ອງມື, ໜ່ວຍງານ ແລະ ບົດສະຫຼຸບ ການຕິດຕາມ ການຮຽນ-ການສອນ<br>✓ ກົນໄກ, ຂັ້ນຕອນ, ວິທີການ/ເຄື່ອງມື, ໜ່ວຍງານ ແລະ ບົດສະຫຼຸບ ການຕິດຕາມ ການລົງຝຶກງານ<br>✓ ວິທີການ ປະເມີນຜົນສໍາເລັດຂອງຜູ້ຮຽນ | | |
| ຄໍາຖາມ ພິຈາລະນາ | ຂັ້ນຕອນ | ລະດັບ |
| *Q-38 ລາຍລະອຽດຂອງປະຕິທິນ, ຕາຕະລາງ ແລະ ແຜນການສອນ ມີຄືແນວໃດ?* | Plan | 1-2 |

| | | |
|---|---|---|
| *Q-39 ຄວາມເໝາະສົມ ໃນການສົ່ງເສີມ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ?* | Plan | |
| *Q-40 ລາຍລະອຽດຂອງອຸປະກອນ/ສື່, ເຄື່ອງມື/ເຄື່ອງຈັກ ແລະ ສະຖານທີ່ຝຶກງານ ມີຄວາມສອດຄ່ອງ ແລະ ເໝາະສົມ ຄືແນວໃດ?* | Do | 3 |
| *Q-41 ການຕິດຕາມ ການຮຽນການສອນ, ການປະຕິບັດຕົວຈິງ ແລະ ການລົງຝຶກງານ ມີຄວາມສອດຄ່ອງ ຄືແນວໃດ?* | Do | |
| *Q-42 ການປະເມີນຜົນສຳເລັດຂອງຜູ້ຮຽນ ມີຄວາມສອດຄ່ອງ ຄືແນວໃດ?* | Check | 4 |
| *Q-43 ທົບທວນ/ປັບປຸງ ການຈັດຕັ້ງປະຕິບັດ ການຮຽນການສອນ ຄືແນວໃດ?* | Act | 5 |

## ມາດຕະຖານVI: ການສົ່ງເສີມຜູ້ຮຽນ

(62) ການສົ່ງເສີມຜູ້ຮຽນ ແນໃສ່ການສົ່ງເສີມດ້ານວິຊາການເພື່ອບັນລຸວິໄສທັດ, ພາລະກິດ ແລະ ຈຸດໝາຍຂອງສະຖານການສຶກສາ. ໂດຍເລີ່ມຕົ້ນຈາກການກຳນົດມາດຕະຖານ ແລະ ເງື່ອນໄຂຂອງຜູ້ຮຽນໃຫ້ຈະແຈ້ງ; ເພື່ອເປັນບ່ອນອີງ ໃນການຄັດເລືອກຜູ້ຮຽນໃຫ້ສອດຄ່ອງກັບຫຼັກສູດທີ່ກຳນົດ; ພ້ອມທັງເປັນການບຳລຸງ/ຍົກລະດັບຜູ້ຮຽນທີ່ຕ້ອງການຄວາມເອົາໃຈໃສ່ເປັນພິເສດໃຫ້ມີຄວາມພ້ອມຕາມຫຼັກສູດທີ່ກຳນົດ.

(63) ຄຽງຄູ່ກັບການຈັດຕັ້ງປະຕິບັດຫຼັກສູດ, ຜູ້ຮຽນຄວນໄດ້ຮັບການສົ່ງເສີມທາງດ້ານວິຊາການ ທີ່ເປັນອັນໃໝ່ທັນກັບສະພາບການປ່ຽນແປງຂອງສັງຄົມ ແລະ ເຕັກໂນໂລຊີທີ່ກ່ຽວຂ້ອງ; ໄດ້ຮັບການສົ່ງເສີມພັດທະນາສີມື ຫຼື ຄວາມຮູ້ຄວາມສາມາດ ຕາມມາດຕະຖານອາຊີບ ຫຼື ສະມັດຕະພາບຕ່າງໆ. ພ້ອມດຽວກັນ, ຕ້ອງສົ່ງເສີມເພື່ອເປັນການປູກຈິດສຳນຶກໃນການອະນຸລັກສິ່ງແວດລ້ອມ ແລະ ວັດທະນະທຳ ແບບມີສ່ວນຮ່ວມກັບຊຸມຊົນ/ສັງຄົມ.

| ຕົວຊີ້ວັດ | | |
|---|---|---|
| (26) ມີລະບຽບຫຼັກການ, ມາດຕະຖານຈະແຈ້ງ ໃນການຮັບຜູ້ຮຽນ.<br>(27) ສະຖານການສຶກສາ ໃຫ້ຄວາມສຳຄັນ ແລະ ມີກົນໄກໃນການໃຫ້ຄຳປຶກສາ ທັງທາງດ້ານວິຊາການ ແລະ ບັນຫາອື່ນໆ.<br>(28) ມີແຜນການເຄື່ອນໄຫວນອກຫຼັກສູດ, ໄດ້ຜັນຂະຫຍາຍອອກເປັນແຜນກິດຈະກຳ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງປະຕິບັດ.<br>(29) ມີການຈັດຕັ້ງຂອງຜູ້ຮຽນ ແລະ ໄດ້ເຄື່ອນໄຫວຢ່າງເຕັມສ່ວນ ຕໍ່ບັນດາກິດຈະກຳຕ່າງໆຂອງສະຖານການສຶກສາ.<br>(30) ມີອົງການຈັດຕັ້ງມະຫາຊົນ ແລະ ມີການເຄື່ອນໄຫວຢ່າງເຕັມສ່ວນ ເຂົ້າໃນກິດຈຳກຳຕ່າງໆ.<br>(31) ມີການຮ່ວມມືກັບອາດີດນັກສຶກສາທີ່ຈົບໄປ ໃນຮູບແບບຕ່າງໆ ແລະ ໄດ້ຈັດຕັ້ງປະຕິບັດປົກກະຕິ.<br>(32) ມີເຄືອຄ່າຍກັບຜູ້ປະກອບການ ແລະ ເຄື່ອນໄຫວເປັນປົກກະຕິ ເພື່ອຊ່ວຍຜູ້ຮຽນຈົບໃໝ່ ຊອກວຽກເຮັດງານທຳ. | | |
| ຂໍ້ມູນຫຼັກຖານ | | |
| ✓ ແຜນຄວາມຕ້ອງການ, ມາດຕະຖານ/ເງື່ອນໄຂຂອງຜູ້ຮຽນ<br>✓ ຂັ້ນຕອນ, ວິທີການຄັດເລືອກ ແລະ ວິທີການບຳລຸງຜູ້ຮຽນ (ເພື່ອໃຫ້ມີຄວາມພ້ອມຕາມມາດຕະຖານ)<br>✓ ພາກສ່ວນທີ່ຮັບຜິດຊອບ ແລະ ກົນໄກໃນການໃຫ້ຄຳປຶກສາ<br>✓ ແຜນກິດຈະກຳ ແລະ ບົດສະຫຼຸບ/ບົດລາຍງານ ການເຄື່ອນໄຫວນອກຫຼັກສູດ<br>✓ ແຜນວາດການຈັດຕັ້ງຜູ້ຮຽນ ແລະ ແຜນກິດຈະກຳການເຄື່ອນໄຫວ<br>✓ ແຜນວາດອົງການຈັດຕັ້ງມະຫາຊົນ ແລະ ແຜນກິດຈະກຳການເຄື່ອນໄຫວ<br>✓ ແຜນກິດຈະກຳ ແລະ ບົດສະຫຼຸບ/ບົດລາຍງານ ການຮ່ວມມືກັບອາດີດນັກສຶກສາ ແລະ ເຄືອຄ່າຍຜູ້ປະກອບການຕ່າງໆ | | |
| ຄຳຖາມ ພິຈາລະນາ | ຂັ້ນຕອນ | ລະດັບ |
| *Q-44 ມາດຕະຖານ ແລະ ເງື່ອນໄຂຂອງຜູ້ຮຽນ ມີຄວາມສອດຄ່ອງ ຄືແນວໃດ?* | Plan | 1-2 |

| | | |
|---|---|---|
| *Q-45 ວິທີການຄັດເລືອກ ມີຄວາມສອດຄ່ອງ ຄືແນວໃດ?* | Plan | |
| *Q-46 ແຜນການຕ່າງໆ ໃນການສົ່ງເສີມຜູ້ຮຽນ ມີຄືແນວໃດ?* | Plan | |
| *Q-47 ລາຍລະອຽດ ການໃຫ້ຄຳປຶກສາ ແລະ ບັນຫາອື່ນໆ ມີຄືແນວໃດ?* | Do | 3 |
| *Q-48 ລາຍລະອຽດ ການເຄື່ອນໄຫວນອກຫຼັກສູດ ມີຄືແນວໃດ?* | Do | |
| *Q-49 ລາຍລະອຽດ ກ່ຽວກັບ ການຈັດຕັ້ງຜູ້ຮຽນ ແລະ ອົງການຈັດຕັ້ງມະຫາຊົນ ມີຄືແນວໃດ? ມີການເຄື່ອນໄຫວ ຄືແນວໃດ?* | Do | |
| *Q-50 ລາຍລະອຽດ ການຮ່ວມມື ກັບອາດີດນັກສຶກສາ ແລະ ເຄືອຄ່າຍຜູ້ປະກອບການ ເປັນຄືແນວໃດ?* | Do | |
| *Q-51 ມາດຕະຖານ / ເງື່ອນໄຂຂອງຜູ້ຮຽນ ມີຄວາມສອດຄ່ອງ ຄືແນວໃດ?* | Check | 4 |
| *Q-52 ການສົ່ງເສີມດ້ານຕ່າງໆ ມີຄວາມສອດຄ່ອງ ຄືແນວໃດ?* | Check | |
| *Q-53 ທົບທວນ/ປັບປຸງ ການສົ່ງເສີມຜູ້ຮຽນ ຄືແນວໃດ?* | Act | 5 |

## ມາດຕະຖານVII: ສະພາບແວດລ້ອມ ແລະ ແຫຼ່ງຮຽນຮູ້

(64) ສະຖານການສຶກສາ ຕ້ອງຕັ້ງຢູ່ສະພາບແວດລ້ອມ ທີ່ເອື້ອອຳນວຍແກ່ການຮຽນ-ການສອນ, ມີສະຖານທີ່ ກ້ວາງຂວາງເພື່ອຕອບສະໜອງກິດຈະກຳການຮຽນ-ການສອນ, ກິລາ ແລະ ສິລະປະ; ມີສະຖານທີ່ພັກຜ່ອນຂອງຜູ້ຮຽນ , ຫ່າງໄກຈາກສະຖານບັນເທີງ, ສຽງດັງລົບກວນ ແລະ ອື່ນໆ.

(65) ສະຖານການສຶກສາ ຕ້ອງຈັດສັນສິ່ງອຳນວຍຄວາມສະດວກ ຢ່າງຄົບຖ້ວນ ແລະ ມີການບໍລິຫານຈັດການຢ່າງມີປະສິດທິພາບ ເພື່ອບັນລຸວິໄສທັດ,

ພາລະກິດ ແລະ ຈຸດໝາຍ ເຊັ່ນ: ຫ້ອງຮຽນ, ຫ້ອງການ, ຫ້ອງປະຊຸມ, ສະໂມສອນ, ຫ້ອງປະຖົມພະຍາບານຂັ້ນພື້ນຖານ, ຫ້ອງນໍ້າ, ລະບົບໄຟຟ້າ, ນໍ້າປະປາ/ລະບົບນໍ້າສະອາດ ແລະ ເຄື່ອງມືຮັບໃຊ້ທີ່ຈຳເປັນອື່ນໆ. ພ້ອມດຽວກັນ, ຄວນປະສານສົມທົບກັບພາກສ່ວນພາຍນອກເຊັ່ນ: ອຳນາດການປົກຄອງ, ອົງການຈັດຕັ້ງມະຫາຊົນ ແລະ ອື່ນໆ ເພື່ອກຳນົດລະບົບ ແລະ ກົນໄກການປ້ອງກັນຄວາມສະຫງົບ ຢ່າງເໝາະສົມ.

(66) ສະຖານການສຶກສາ ຕ້ອງຈັດສັນແຫຼ່ງຮຽນຮູ້ ເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງຈຳລອງ, ຫ້ອງຄອມພິວເຕີ, ປຶ້ມຕຳລາຮຽນ, ວາລະສານ, ບົດຄົ້ນຄ້ວາ, ອິນເຕີເນັດ ຢ່າງເໝາະສົມ ໂດຍໃຫ້ສອດຄ່ອງກັບສາຂາວິຊາທີ່ດຳເນີນການຮຽນ-ການສອນ, ສອດຄ່ອງກັບພາກທິດສະດີ ພາກປະຕິບັດຕົວຈິງ, ຊຸກຍູ້ ວຽກງານຄົ້ນຄວ້າວິທະຍາສາດຂອງຄູອາຈານ ແລະ ນັກສຶກສາ.

(67) ແຫຼ່ງຮຽນຮູ້ ຕ້ອງມີປະລິມານພຽງພໍກັບ ຄວາມຮຽກຮ້ອງຕ້ອງການຂອງຜູ້ຮຽນ ແລະ ໄດ້ຮັບການປັບປຸງ/ບຳລຸງຮັກສາ ຢ່າງເປັນປົກກະຕິໃຫ້ສາມາດນຳໃຊ້ໄດ້ ແລະ ທັນສະໄໝຢູ່ສະເໝີ. ສຳລັບ ແຫຼ່ງຮຽນຮູ້ພາກປະຕິບັດຕົວຈິງ ທີ່ມີຄວາມສ່ຽງຕໍ່ອັນຕະລາຍ ຕ້ອງມີລະບົບ ແລະ ອຸປະກອນຮັກສາຄວາມປອດໄພ ສອດຄ່ອງກັບຂໍ້ກຳນົດຂອງຂະແໜງການນັ້ນໆ.

| ຕົວຊີ້ວັດ |
|---|
| (33) ມີສະພາບແວດລ້ອມ ເອື້ອອຳນວຍການຮຽນ-ການສອນ ແລະ ກ້ວາງຂວາງຕອບສະໜອງ 5 ຫຼັກມູນການສຶກສາ. |
| (34) ມີສິ່ງອຳນວຍຄວາມສະດວກພຽງພໍ (ຕົວຢ່າງເຊັ່ນ: ອາຄານຮຽນ, ຫ້ອງຮຽນ, ຫ້ອງການ, ຫ້ອງປະຊຸມ, ສະໂມສອນ, ຫ້ອງປະຖົມພະຍາບານຂັ້ນພື້ນຖານ, ຫ້ອງນໍ້າ, ລະບົບໄຟຟ້າ, ນໍ້າປະປາ ຫຼື ລະບົບນໍ້າສະອາດ ແລະ ເຄື່ອງມືຮັບໃຊ້ຈຳເປັນອື່ນໆ). |
| (35) ມີລະບົບຮັກສາສຸຂະອະນາໄມ ແລະ ຄວາມປອດໄພ ສຳລັບພະນັກງານ, ຄູອາຈານ ແລະ ນັກສຶກສາ. |
| (36) ມີລະບົບປ້ອງກັນຄວາມສະຫງົບພາຍໃນ. |

<table>
<tr><td colspan="3">(37) ມີການບຳລຸງຮັກສາ, ສ້ອມແປງ, ຂະຫຍາຍ/ພັດທະນາ ແລະ ປັບປຸງສິ່ງອຳນວຍຄວາມສະດວກຄົບວົງຈອນ ເປັນແຕ່ລະໄລຍະ.<br>(38) ມີແຫຼ່ງຮຽນຮູ້ພຽງພໍ ຮັບໃຊ້ການຮຽນການສອນ, ການຄົ້ນຄ້ວາວິທະຍາສາດ (ຕົວຢ່າງເຊັ່ນ: ຫ້ອງສະໝຸດ, ຫ້ອງທົດລອງ, ຫ້ອງຄອມພິວເຕີ, ສື່ທາງເອເລັກໂຕຼນິກ ແລະ ອື່ນໆ).<br>(39) ບັນດາແຫຼ່ງຮຽນຮູ້ ໄດ້ຮັບການປັບປຸງເປັນໄລຍະ ທັນສະໄໝ.<br>(40) ມີພະນັກງານຮັບຜິດຊອບແຫຼ່ງຮຽນຮູ້ ຢ່າງພຽງພໍ, ມີຄວາມສາມາດ ແລະ ປະສົບການທີ່ເໝາະສົມ ເພື່ອຄຸ້ມຄອງການນຳໃຊ້ບັນດາແຫຼ່ງຮຽນຮູ້ຕ່າງໆ.</td></tr>
<tr><td colspan="3">ຂໍ້ມູນຫຼັກຖານ</td></tr>
<tr><td colspan="3">✓ ຄວາມສະຫງົບ, ສະອາດ, ສະດວກ ຂອງການຮຽນ-ການສອນ<br>✓ ລາຍລະອຽດຂອງການຜັນຂະຫຍາຍ / ຈັດຕັ້ງປະຕິບັດ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ<br>✓ ແຜນຜັງ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກອື່ນໆ<br>✓ ແຜນບຳລຸງຮັກສາ ແລະ ພັດທະນາ ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກອື່ນໆ<br>✓ ກົນໄກ, ຂັ້ນຕອນ ແລະ ວິທີການອື່ນໆ ໃນການປ້ອງກັນຄວາມສະຫງົບ<br>✓ ລາຍການຂອງແຫຼ່ງຮຽນຮູ້<br>✓ ລາຍການທາງດ້ານປະລິມານ ແລະ ຄຸນນະພາບ ຂອງອຸປະກອນ/ສື່ ທີ່ປະກອບໃສ່ແຫຼ່ງຮຽນຮູ້ຕ່າງໆ<br>✓ ແຜນການຄຸ້ມຄອງ, ວິທີການຈັດສັນແຫຼ່ງຮຽນຮູ້, ບຸກຄະລາກອນ ທີ່ຮັບຜິດຊອບແຫຼ່ງຮຽນຮູ້ຕ່າງໆ</td></tr>
<tr><td>ຄຳຖາມ ພິຈາລະນາ</td><td>ຂັ້ນຕອນ</td><td>ລະດັບ</td></tr>
<tr><td>Q-54 ລາຍລະອຽດຂອງສະພາບແວດລ້ອມ ແລະ ພື້ນຖານໂຄງລ່າງ ມີຄືແນວໃດ?</td><td>Plan</td><td rowspan="4">1-2</td></tr>
<tr><td>Q-55 ລາຍລະອຽດຂອງແຫຼ່ງຮຽນຮູ້ ມີຄືແນວໃດ?</td><td>Plan</td></tr>
<tr><td>Q-56 ລາຍລະອຽດຂອງການຜັນຂະຫຍາຍ 3 ລັກສະນະ ແລະ 5 ຫຼັກມູນການສຶກສາ ມີຄືແນວໃດ?</td><td>Plan</td></tr>
<tr><td>Q-57 ລະບົບປ້ອງກັນຄວາມສະຫງົບ ມີຄືແນວໃດ?</td><td>Plan</td></tr>
</table>

| | | |
|---|---|---|
| *Q-58 ສະພາບແວດລ້ອມ ເອື້ອອຳນວຍ ແກ່ການຮຽນ-ການສອນ ຄືແນວໃດ?* | Do | 3 |
| *Q-59 ພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ມີຄວາມເໝາະສົມ ຄືແນວໃດ?* | Do | |
| *Q-60 ແຫຼ່ງຮຽນຮູ້ ມີຄວາມສອດຄ່ອງ ແລະ ເໝາະສົມ ຄືແນວໃດ?* | Do | |
| *Q-61 ກົນໄກຕິດຕາມ ຄວາມເປັນລະບຽບຮຽບຮ້ອຍ ແລະ ສະພາບການໃຊ້ງານຂອງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ ເປັນຄືແນວໃດ?* | Check | 4 |
| *Q-62 ການຕິດຕາມ ແລະ ກວດສອບ ຄວາມເໝາະສົມ ຂອງແຫຼ່ງຮຽນຮູ້ ເຮັດໄດ້ ຄືແນວໃດ?* | Check | |
| *Q-63 ມາດຕະການບຳລຸງຮັກສາ ແລະ ພັດທະນາ ເຮັດໄດ້ ຄືແນວໃດ?* | Act | 5 |

## ມາດຕະຖານVIII: ລະບົບຂໍ້ມູນຂ່າວສານ

(68) ລະບົບຂໍ້ມູນຂ່າວສານ ຕ້ອງມີລະບຽບ ແລະ ກົນໄກໃນການຄຸ້ມຄອງທີ່ເໝາະສົມ ເພື່ອນຳໃຊ້ເຂົ້າໃນການບໍລິຫານຈັດການຕ່າງໆ ໃຫ້ມີຄວາມສອດຄ່ອງ, ວ່ອງໄວ ແລະ ຊັດເຈນ; ຊຶ່ງປະກອບດ້ວຍຂໍ້ມູນຂອງຜູ້ຮຽນ, ບຸກຄະລາກອນ, ຊັບສິນ ແລະ ຜູ້ຮຽນຈົບ. ຂໍ້ມູນດັ່ງກ່າວ ຕ້ອງໄດ້ຮັບການປັບປຸງຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ ໃຫ້ທັນກັບສະພາບການຢູ່ສະເໝີ.

(69) ສະຖານການສຶກສາ ຄວນນຳໃຊ້ຂໍ້ມູນຂ່າວສານ ເພື່ອປະຊາສຳພັນ ແລະ ໂຄສະນາເຜີຍແຜ່ ໃຫ້ແກ່ນັກຮຽນມັດທະຍົມສຶກສາ, ພໍ່ແມ່ຜູ້ປົກຄອງ, ຜູ້ປະກອບການ, ຜູ້ບໍລິຫານການສຶກສາທຸກລະດັບ, ພະນັກງານ, ຄູ-ອາຈານ ແລະ ສັງຄົມ ໃຫ້ຮັບຮູ້ ກ່ຽວກັບ ສະຖານການສຶກສາ, ຜົນປະໂຫຍດໃນການເຂົ້າມາສຶກສາຢູ່ໃນສະຖານການສຶກສາ ແລະ ອື່ນໆ ຢ່າງກວ້າງຂວາງ.

| ຕົວຊີ້ວັດ | | |
|---|---|---|
| (41) ສະຖານການສຶກສາ ມີລະບົບຂໍ້ມູນເພື່ອການບໍລິຫານ ແລະ ຄຸ້ມຄອງ ທີ່ມີປະສິດທິພາບ, ທັນກັບສະພາບການ ແລະ ຮັບປະກັນຄວາມປອດໄພ.<br>(42) ສະຖານການສຶກສາ ມີຖານຂໍ້ມູນປະຫວັດນັກສຶກສາ (ຕົວຢ່າງເຊັ່ນ: ຈຳນວນນັກສຶກສາເຂົ້າຮຽນ, ອັດຕາການປະລະການສຶກສາ, ຈຳນວນຜູ້ສຳເລັດການສຶກສາ, ອັດຕາຜູ້ສຶກສາຕໍ່ ແລະ ການກ້າວໄປສູ່ການຊອກວຽກເຮັດງານທຳ) ແລະ ຖານຂໍ້ມູນຂອງຄູອາຈານ, ພະນັກງານບໍລິຫານ.<br>(43) ສະຖານການສຶກສາ ມີລະບົບຂໍ້ມູນ ແລະ ຖານຂໍ້ມູນຂອງລາຍການຊັບສິນ, ເຄື່ອງໃນສາງ ແລະ ອື່ນໆ. | | |
| ຂໍ້ມູນຫຼັກຖານ | | |
| ✓ ກົນໄກ, ຂັ້ນຕອນ ແລະ ວິທີການ ເກັບກຳ/ບັນທຶກຂໍ້ມູນ ຜູ້ຮຽນ<br>✓ ກົນໄກ, ຂັ້ນຕອນ ແລະ ວິທີການ ເກັບກຳ/ບັນທຶກຂໍ້ມູນ ບຸກຄະລາກອນ<br>✓ ກົນໄກ, ຂັ້ນຕອນ ແລະ ວິທີການ ເກັບກຳ/ບັນທຶກຂໍ້ມູນ ຊັບສິນ<br>✓ ກົນໄກ, ຂັ້ນຕອນ ແລະ ວິທີການ ເກັບກຳ/ບັນທຶກຂໍ້ມູນ ຜູ້ຮຽນຈົບ<br>✓ ລະບຽບການຄຸ້ມຄອງ ແລະ ເກັບຮັກສາຂໍ້ມູນຂ່າວສານ<br>✓ ເຄື່ອງມື ໂຄສະນາປະຊາສຳພັນ ຮູບແບບຕ່າງໆ<br>✓ ແຜນການ ແລະ ງົບປະມານ ໃນການຈັດຕັ້ງປະຕິບັດ ວຽກງານໂຄສະນາປະຊາສຳພັນ | | |
| ຄຳຖາມ ພິຈາລະນາ | ຂັ້ນຕອນ | ລະດັບ |
| *Q-64 ລາຍລະອຽດ ກ່ຽວກັບການເກັບກຳຂໍ້ມູນ ຜູ້ຮຽນ ມີຄືແນວໃດ?* | Plan | 1-2 |
| *Q-65 ລາຍລະອຽດ ກ່ຽວກັບການເກັບກຳຂໍ້ມູນ ບຸກຄະລາກອນ ມີຄືແນວໃດ?* | Plan | |
| *Q-66 ລາຍລະອຽດ ກ່ຽວກັບການເກັບກຳຂໍ້ມູນ ຊັບສິນ ມີຄືແນວໃດ?* | Plan | |
| *Q-67 ການຄຸ້ມຄອງ ແລະ ເກັບຮັກສາຂໍ້ມູນຂ່າວສານ ດຳເນີນການ ຄືແນວໃດ?* | Do | 3 |

| | | |
|---|---|---|
| *Q-68 ການໂຄສະນາປະຊາສໍາພັນ ດໍາເນີນການ ຄືແນວໃດ?* | Do | |
| *Q-69 ລາຍລະອຽດ ກ່ຽວກັບການເກັບກໍາຂໍ້ມູນ ຜູ້ຮຽນຈົບ ມີຄືແນວໃດ?* | Check | 4 |
| *Q-70 ລະບົບຂໍ້ມູນຂ່າວສານ ມີຄວາມສອດຄ່ອງ ແລະ ເໝາະສົມ ຄືແນວໃດ?* | Check | |
| *Q-71 ທົບທວນ/ປັບປຸງ ລະບົບຂໍ້ມູນຂ່າວສານ ຄືແນວໃດ?* | Act | 5 |

## ມາດຕະຖານIX: ລະບົບປະກັນຄຸນນະພາບ

(70) ສະຖານການສຶກສາ ຕ້ອງມີລະບົບ ແລະ ໜ່ວຍງານປະກັນຄຸນນະພາບພາຍໃນ ມີທີ່ຕັ້ງ ຢູ່ພາຍໃຕ້ການຊີ້ນໍາຂອງຄະນະບໍລິຫານໂດຍກົງ. ໂດຍກໍານົດ ນະໂຍບາຍ, ຈຸດປະສົງ, ເປົ້າໝາຍ, ຍຸດທະສາດ ແລະ ແຜນງານ ການປະກັນຄຸນນະພາບ ຢ່າງຊັດເຈນ.

(71) ບັນດາແຜນງານຕ້ອງໄດ້ຮັບ ການສະໜັບສະໜູນທາງດ້ານບຸກຄະລາກອນ ແລະ ງົບປະມານ, ມີການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ເປັນປົກກະຕິຮັບປະກັນການຈັດຕັ້ງປະຕິບັດ ວິໄສທັດ, ພາລະກິດ ແລະ ຈຸດໝາຍ ຂອງສະຖານການສຶກສາໃຫ້ບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍ, ເຮັດໃຫ້ລະບົບບໍລິຫານຄຸນນະພາບ ມີຄວາມຍືນຍົງ.

| ຕົວຊີ້ວັດ |
|---|
| (44) ສະຖານການສຶກສາ ມີນະໂຍບາຍ, ຍຸດທະສາດ, ແຜນການ-ແຜນງານ ແລະ ຂັ້ນຕອນການປະກັນຄຸນນະພາບ ທີ່ຈະແຈ້ງ.<br>(45) ສະຖານການສຶກສາ ຈັດການເຜີຍແຜ່ ແລະ ການເຝິກອົບ ຮົມກ່ຽວກັບວຽກງານປະກັນຄຸນນະພາບ ໃຫ້ພະນັກງານ ແລະ ນັກສຶກສາ ໃຫ້ມີຄວາມຮູ້ ແລະ ຄວາມເຂົ້າໃຈ ຢ່າງເປັນປົກກະຕິ. |

<table>
<tr><td colspan="3">(46) ຜົນຂອງການປະເມີນຕົນເອງ ໄດ້ຖືກນໍາໃຊ້ ແລະ ຜັນຂະຫຍາຍ ເຂົ້າໃສ່ແຜນການພັດທະນາ.<br>(47) ສະຖານການສຶກສາ ມີການທົບທວນ, ຕິດຕາມ ແລະ ປັບປຸງວຽກງານປະກັນຄຸນນະພາບຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ.</td></tr>
<tr><td colspan="3">ຂໍ້ມູນຫຼັກຖານ</td></tr>
<tr><td colspan="3">✓ ຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບ ແລະ/ຫຼື ໜ່ວຍງານປະກັນຄຸນນະພາບ<br>✓ ກົນໄກ, ຂັ້ນຕອນ ແລະ ວິທີການປະກັນຄຸນນະພາບ ຄູສອນ, ການຮຽນ-ການສອນ, ຜູ້ຮຽນ<br>✓ ແຜນການ ແລະ ບົດສະຫຼຸບ ການເຜີຍແຜ່ ແລະ/ຫຼື ການເຝິກອົບຮົມ ວຽກງານປະກັນຄຸນນະພາບ<br>✓ ບົດລາຍງານການປະເມີນຕົນເອງ ແລະ ແຜນພັດທະນາຄຸນນະພາບ<br>✓ ບົດລາຍງານ ຄວາມຄືບໜ້າຂອງການພັດທະນາຄຸນນະພາບ (ກໍລະນີຂອງປີທີ່ບໍ່ໄດ້ ປະເມີນຕົນເອງ)</td></tr>
<tr><td>ຄໍາຖາມ ພິຈາລະນາ</td><td>ຂັ້ນຕອນ</td><td>ລະດັບ</td></tr>
<tr><td>Q-72 ລາຍລະອຽດຂອງໜ່ວຍງານປະກັນຄຸນນະພາບ ມີຄືແນວໃດ?</td><td>Plan</td><td rowspan="2">1-2</td></tr>
<tr><td>Q-73 ລາຍລະອຽດຂອງນະໂຍບາຍ, ຍຸດທະສາດ ແລະ ແຜນງານ ມີຄືແນວໃດ?</td><td>Plan</td></tr>
<tr><td>Q-74 ການປະກັນຄຸນນະພາບດ້ານຕ່າງໆ ມີຄວາມສອດຄ່ອງ ຄືແນວໃດ?</td><td>Do</td><td rowspan="3">3</td></tr>
<tr><td>Q-75 ການປະເມີນຕົນເອງ ມີຄວາມສອດຄ່ອງ ຄືແນວໃດ?</td><td>Do</td></tr>
<tr><td>Q-76 ຜົນການປະເມີນ ນໍາໃຊ້ເຂົ້າໃນການ ພັດທະນາຄຸນນະພາບ ຄືແນວໃດ?</td><td>Do</td></tr>
<tr><td>Q-77 ການພັດທະນາຄຸນນະພາບ ມີຄວາມຄືບໜ້າ ຄືແນວໃດ?</td><td>Check</td><td rowspan="2">4</td></tr>
<tr><td>Q-78 ລະບົບປະກັນຄຸນນະພາບ ມີປະສິດທິຜົນ ແລະ ປະສິດທິພາບ ຄືແນວໃດ?</td><td>Check</td></tr>
</table>

| Q-79 ທົບທວນ/ປັບປຸງ ລະບົບປະກັນຄຸນນະພາບ ຄືແນວໃດ? | Act | 5 |
|---|---|---|

## ມາດຕະຖານX: ການຄົ້ນຄວ້າ ແລະ ບໍລິການສັງຄົມ

(72) ສະຖານການສຶກສາ ຕ້ອງມີນະໂຍບາຍ, ຍຸດທະສາດ, ຈຸດປະສົງ, ເປົ້າໝາຍ ແລະ ແຜນງານ ກ່ຽວກັບການຄົ້ນຄວ້າວິທະຍາສາດ ແລະ ການບໍລິການສັງຄົມ ຢ່າງຈະແຈ້ງ ເພື່ອສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ເອື້ອອຳນວຍ ໃຫ້ແກ່ຜູ້ຮຽນ ແລະ ພະນັກງານຄູ-ອາຈານ ເຂົ້າຮ່ວມໃນກິດຈະກຳດັ່ງກ່າວ.

| ຕົວຊີ້ວັດ |
|---|
| (48) ມີນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ທີ່ສົ່ງເສີມຄູອາຈານ ແລະ ນັກສຶກສາ ດຳເນີນການຄົ້ນຄວ້າວິໄຈ ແລະ ການໃຫ້ບໍລິການດ້ານວິຊາການແກ່ສັງຄົມ.<br>(49) ມີການຄົ້ນຄວ້າວິທະຍາສາດ ເປັນປົກກະຕິ ແລະ ໄດ້ເຜີຍແຜ່ຜົນງານການຄົ້ນຄວ້າໃຫ້ສັງຄົມໄດ້ຮັບຮູ້.<br>(50) ມີການບໍລິການທາງດ້ານວິຊາການໃຫ້ແກ່ສັງຄົມ ເປັນປົກກະຕິ. |
| ຂໍ້ມູນຫຼັກຖານ |
| ✓ ນະໂຍບາຍ ແລະ ຍຸດທະສາດຕ່າງໆທີ່ລະບຸເຖິງ ການສົ່ງເສີມຫົວຄິດປະດິດສ້າງ ແລະ ການບໍລິການສັງຄົມ<br>✓ ລະບຽບການ ສົ່ງເສີມວຽກງານ ຫົວຄິດປະດິດສ້າງ ແລະ ການບໍລິການສັງຄົມ<br>✓ ແຜນການໄລຍະຍາວ, ແຜນປະຈຳປີ ເພື່ອສົ່ງເສີມວຽກງານ ຫົວຄິດປະດິດສ້າງ ແລະ ການບໍລິການສັງຄົມ<br>✓ ອັດຕາສ່ວນຂອງງົບປະມານ ທີ່ຈັດສັນໃຫ້ວຽກງານ ຫົວຄິດປະດິດສ້າງ ແລະ ການບໍລິການສັງຄົມ<br>✓ ບົດສະຫຼຸບວຽກງານ ຫົວຄິດປະດິດສ້າງ ແລະ ການບໍລິການສັງຄົມ<br>✓ ໝາກຜົນ ແລະ ຄວາມຍືນຍົງຂອງວຽກງານ ຫົວຄິດປະດິດສ້າງ ແລະ ການບໍລິການສັງຄົມ |

| ຄຳຖາມ ພິຈາລະນາ | ຂັ້ນຕອນ | ລະດັບ |
|---|---|---|
| *Q-80 ນະໂຍບາຍ, ຍຸດທະສາດ ແລະ ລະບຽບການ ສົ່ງເສີມ ມີຄືແນວໃດ?* | Plan | 1-2 |
| *Q-81 ແຜນການ, ແຜນງານ ແລະ ແຜນງົບປະມານ ມີຄືແນວໃດ?* | Plan | |
| *Q-82 ວຽກງານສົ່ງເສີມ ຫົວຄິດປະດິດສ້າງ ມີຄືແນວໃດ?* | Do | 3 |
| *Q-83 ວຽກງານສົ່ງເສີມ ການບໍລິການສັງຄົມ ມີຄືແນວໃດ?* | Do | |
| *Q-84 ການສົ່ງເສີມ ມີຄວາມສອດຄ່ອງ ແລະ ເໝາະສົມ ຄືແນວໃດ?* | Check | 4 |
| *Q-85 ທົບທວນ/ປັບປຸງ ການສົ່ງເສີມ ຄືແນວໃດ?* | Act | 5 |

# ບົດທີ 3: ການປະກັນຄຸນນະພາບພາຍໃນ

## 3.1. ຄວາມສຳຄັນ ແລະ ຈຸດປະສົງ

(73) ລະບົບການປະກັນຄຸນນະພາບພາຍໃນ (IQA) ມີຄວາມສຳຄັນເປັນຢ່າງຍິ່ງ ຕໍ່ການປັບປຸງຄຸນນະພາບຢ່າງຕໍ່ເນື່ອງ ແລະ ການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ຂອງສະຖານການສຶກສາ. ເມື່ອສົມທຽບເບິ່ງ ມາດຕະຖານປະກັນຄຸນນະພາບ ຂອງຫຼາຍໆອົງກອນປະກັນຄຸນນະພາບ ໃນຫຼາຍໆປະເທດ; ເຫັນໄດ້ວ່າ ລະບົບດັ່ງກ່າວ ໄດ້ຖືກບັນຈຸ ຈົນກາຍເປັນມາດຕະຖານໜຶ່ງ ຊຶ່ງຖືເປັນພາກບັງຄັບ ທີ່ທຸກໆສະຖານການສຶກສາ ຕ້ອງໄດ້ຈັດຕັ້ງປະຕິບັດ.

(74) ຈຸດປະສົງຂອງການປະກັນຄຸນນະພາບພາຍໃນ ມີດັ່ງນີ້:

- **ສົ່ງເສີມ, ປັບປຸງ ແລະ ພັດທະນາຄຸນນະພາບຂອງສະຖານການສຶກສາໂດຍລວມ;**
- **ຕິດຕາມ ແລະ ປັບປຸງຄຸນນະພາບຂອງການຮຽນ-ການສອນ, ຄູ ແລະ ຜູ້ຮຽນ ເວົ້າສະເພາະ;**
- **ສ້າງຄວາມໝັ້ນໃຈ ແກ່ຜູ້ມີສ່ວນຮ່ວມທັງພາຍໃນ ແລະ ພາຍນອກສະຖານການສຶກສາ;**
- **ກະກຽມຄວາມພ້ອມ ເພື່ອຮັບການປະເມີນຄຸນນະພາບພາຍນອກ (ຕົວຢ່າງເຊັ່ນ: ຂໍ້ມູນຫຼັກຖານ, ບົດລາຍງານການປະເມີນຕົນເອງ ແລະ ສິ່ງອຳນວຍຄວາມສະດວກອື່ນໆ).**

## 3.2. ຫຼັກການພື້ນຖານ

(75) ໃນການຈັດຕັ້ງປະຕິບັດ ການປະກັນຄຸນນະພາບພາຍໃນ ຕ້ອງຄຳນຶງເຖິງບັນດາຫຼັກການພື້ນຖານ ດັ່ງນີ້:

***ຫຼັກການທີ 1)***

***ສະຖາບັນການສຶກສາ ມີຄວາມຮັບຜິດຊອບເປັນຕົ້ນຕໍ ຕໍ່ຄຸນນະພາບຂອງຕົນເອງ.***

***ຄວາມໝາຍ:***

*ມັນເປັນຄວາມຄາດຫວັງທົ່ວໄປ ທີ່ວ່າ ສະຖາບັນການສຶກສາ ຕ້ອງມີຄວາມຮັບຜິດຊອບຢ່າງເຕັມສ່ວນ ໃນການພັດທະນາ ແລະ ຈັດຕັ້ງປະຕິບັດ ລະບົບ/ຂະບວນການ ເພື່ອຮັບປະກັນ ຄຸນນະພາບຂອງການຮຽນການສອນ ແລະ ກິດຈະກຳອື່ນໆ.*

*ສະຖາບັນການສຶກສາ ສາມາດສະແດງໃຫ້ເຫັນໄດ້ ຢູ່ໃນບັນດານະໂຍບາຍ, ຍຸດທະສາດ, ນິຕິກຳອື່ນໆ ແລະ ການຈັດຕັ້ງປະຕິບັດຕົວຈິງຂອງຕົນ.*

*ສ່ວນການປະກັນຄຸນນະພາບ ພາຍນອກ ມີໄວ້ເພື່ອຮັບປະກັນວ່າ ຄວາມຮັບຜິດຊອບດັ່ງກ່າວຂອງສະຖາບັນການສຶກສາ ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ.*

***ຫຼັກການທີ 2)***

***ການປະກັນຄຸນນະພາບ ສົ່ງເສີມຄວາມສົມດຸນລະຫວ່າງ ສິດເປັນເຈົ້າຕົນເອງ ແລະ ຄວາມຮັບຜິດຊອບຕໍ່ສັງຄົມ ຂອງສະຖາບັນການສຶກສາ.***

*(ສິດເປັນເຈົ້າຕົນເອງ ໝາຍເຖິງ ຄວາມເປັນອິດສະຫຼະ, ຄວາມເປັນເຈົ້າຕົນເອງ ແລະ ການມີສິດຕ່າງໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ, ດຳລັດວ່າດ້ວຍການສຶກສາຊັ້ນສູງ, ມາດຕາ3 ຂໍ້8)*

***ຄວາມໝາຍ:***

*ສະຖາບັນການສຶກສາ ມີສິດເປັນເຈົ້າຕົນເອງ ໃນການກຳນົດວິໄສທັດ, ພາລະກິດ, ຈຸດໝາຍ, ລະບົບບໍລິຫານຄຸ້ມຄອງ, ນະໂຍບາຍ ແລະ ຍຸດທະສາດຕ່າງໆ ເພື່ອຈັດຕັ້ງປະຕິບັດວຽກງານຂອງຕົນ.*

ການສຶກສາ ຖືໄດ້ວ່າເປັນ ສາທາລະນະປະໂຫຍດອັນໜຶ່ງ (**public good**), ເພາະສະນັ້ນ ສະຖານການສຶກສາ ຕ້ອງໄດ້ຮັບປະກັນຄວາມສົມດຸນ ລະຫວ່າງ ຄວາມຕ້ອງການຂອງສະຖານການສຶກສາເອງ ແລະ ຄວາມຕ້ອງການຂອງສັງຄົມ; ໝາຍວ່າ ນອກຈາກຈັດຕັ້ງປະຕິບັດການຮຽນການສອນ ໃຫ້ໄດ້ຄຸນນະພາບແລ້ວ, ກໍ່ຍັງຕ້ອງເອົາໃຈໃສ່ ໃນການບໍລິການດ້ານວິຊາການແກ່ສັງຄົມ, ການຄົ້ນຄິດປະດິດສ້າງ ແລະ ການຄົ້ນຄວ້າວິທະຍາສາດ ໄປພ້ອມໆກັນ.

**ຫຼັກການທີ 3)**

**ການປະກັນຄຸນນະພາບ ເປັນຂະບວນການແບບມີສ່ວນຮ່ວມ ແລະ ທັງເປັນການໃຫ້ຄວາມຮ່ວມມື ຈາກພະນັກງານທຸກຂັ້ນ, ຄູອາຈານ, ນັກສຶກສາ ແລະ ບັນດາຜູ້ມີສ່ວນຮ່ວມອື່ນ ທັງພາຍໃນ ແລະ ພາຍນອກ.**

**ຄວາມໝາຍ:**

ການປະກັນຄຸນນະພາບ ເປັນຄວາມຮັບຜິດຊອບຮ່ວມ ຂອງບັນດາຜູ້ມີສ່ວນຮ່ວມ, ສະນັ້ນ ການປະກອບສ່ວນ ແລະ ຄຳຄິດເຫັນຕໍ່ຄຸນນະພາບ ທີ່ມາຈາກຫຼາຍພາກສ່ວນ ຈະຊ່ວຍຊຸກຍູ້ ແລະ ສົ່ງເສີມຄຸນນະພາບຂອງສະຖານການສຶກສາ.

ບົດບາດຕໍ່ການປະກັນຄຸນນະພາບ ຂອງແຕ່ລະຜູ້ມີສ່ວນຮ່ວມ ຕ້ອງຖືກກຳນົດ ຢ່າງຈະແຈ້ງ ເພື່ອເປັນຄຳໝັ້ນສັນຍາ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຫຼັກການທີ 4)**

**ການປະກັນຄຸນນະພາບ ຕ້ອງຕິດພັນກັບວຽກງານປົກກະຕິ ຂອງສະຖານການສຶກສາ ແລະ ບໍ່ເປັນວຽກເສີມ ເພີ່ມຄວາມຫຍຸ້ງຍາກໃຫ້ແກ່ພະນັກງານ-ຄູອາຈານ.**

**ຄວາມໝາຍ:**

*ການປະກັນຄຸນນະພາບ ຕ້ອງຖືກພັດທະນາໃຫ້ເປັນສ່ວນໜຶ່ງຂອງ ວຽກງານປົກກະຕິ ເຊັ່ນ: ການຮຽນການສອນ, ການບໍລິການດ້ານວິຊາ ການແກ່ສັງຄົມ, ການຄົ້ນຄິດປະດິດສ້າງ ຫຼື ການຄົ້ນຄວ້າວິທະຍາສາດ; ຈະດຳເນີນການວຽກງານອັນໃດກໍ່ຕາມ ຕ້ອງຄຳນຶງເຖິງຄຸນນະພາບ ເຮັດ ໃຫ້ "ຄຸນນະພາບ" ກາຍເປັນວຽກປະຈຳ ກາຍເປັນວັດທະນະທຳ.*

*ການປະກັນຄຸນນະພາບ ຕ້ອງບໍ່ເປັນວຽກເສີມ ເປັນການເພີ່ມ ຄວາມຫຍຸ້ງຍາກ ໃຫ້ແກ່ພະນັກງານຄູອາຈານ; ມັນຕ້ອງເກາະຕິດ ກັບ ບັນດາວຽກງານຂອງທຸກຄົນໃນລະດັບຮາກຖານ ຈຶ່ງສາມາດພັດທະນາ ສະຖານການສຶກສາ ໃຫ້ມີຄຸນນະພາບໄດ້ຢ່າງແທ້ຈິງ.*

***ຫຼັກການທີ 5)***

***ການປະກັນຄຸນນະພາບພາຍໃນ ຕ້ອງມີ ໂຄງຮ່າງການຈັດຕັ້ງ ແລະ ບົດບາດໜ້າທີ່ ອັນຈະແຈ້ງ ຢູ່ໃນສະຖານການສຶກສາ.***

***ຄວາມໝາຍ:***

*ການປະກັນຄຸນນະພາບພາຍໃນ ແມ່ນລະບົບຄຸນນະພາບຂອງ ສະຖານການສຶກສາ, ຕ້ອງມີພາກສ່ວນຮັບຜິດຊອບວຽກງານນີ້ສະເພາະ ແລະ ມີທີ່ຕັ້ງຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງຄະນະບໍລິຫານ.*

*ພາກສ່ວນດັ່ງກ່າວ ມີໜ້າທີ່ ເຜີຍແຜ່ ແລະ ຝຶກອົບຮົມວຽກງານ ປະກັນຄຸນນະພາບໂດຍລວມ; ພ້ອມທັງ ສົ່ງເສີມ ແລະ ສັງລວມ ວຽກງານ ປະກັນຄຸນນະພາບ ທີ່ຈັດຕັ້ງປະຕິບັດຢູ່ບັນພາກສ່ວນຕ່າງໆເຊັ່ນ: ພະແນກ, ພາກວິຊາ, ຫ້ອງການ, ຄະນະວິຊາ ແລະ ໜ່ວຍງານອື່ນໆ ໃນສະຖານການ ສຶກສາ.*

*ກໍລະນີ ສະຖານການສຶກສາ ບໍ່ທັນມີຄວາມພ້ອມ ໃນການສ້າງຕັ້ງ ໜ່ວຍປະກັນພາຍໃນ ກໍ່ຕ້ອງແຕ່ງຕັ້ງຜູ້ຮັບຜິດຊອບຊົ່ວຄາວ ໄວ້ກ່ອນ ເພື່ອວາງແຜນ ແລະ ພັດທະນາລະບົບຂອງຕົນ.*

***ຫຼັກການທີ 6)***

***ການປະກັນຄຸນນະພາບພາຍໃນ ຕ້ອງໄດ້ຮັບການຊຸກຍູ້ ແລະ ສະໜັບສະໜູນ ຈາກຄະນະບໍລິຫານ ຮັບປະກັນ ຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ ແລະ ຍືນຍົງ.***

***ຄວາມໝາຍ:***

*ຄຸນນະພາບຂອງສະຖານການສຶກສາ ມັນຕິດພັນກັບວິໄສທັດ ແລະ ຍຸດທະສາດການພັດທະນາ. ຖ້າການນຳສູງສຸດ ຫາກເຫັນຄວາມສຳຄັນ ແລະ ໃຫ້ຄຳໝັ້ນສັນຍາ ກໍ່ຈະຊ່ວຍຊຸກຍູ້ ໃຫ້ການຈັດຕັ້ງປະຕິບັດ ສາມາດດຳເນີນການໄປໄດ້ ຢ່າງມີປະສິດທິຜົນ, ຕໍ່ເນື່ອງ ແລະ ຍືນຍົງ.*

*ພ້ອມດຽວກັນ ການສະໜັບສະໜູນຈາກການນຳ ຍັງຊ່ວຍກະຕຸກຊຸກຍູ້ ເຮັດໃຫ້ພະນັກງານໃນທຸກລະດັບ ໃຫ້ຄວາມສຳຄັນ ແລະ ເຂົ້າໃຈຕໍ່ວຽກງານດັ່ງກ່າວ ເປັນພື້ນຖານຂອງການຮ່ວມມື ແລະ ປະກອບຄຳຄິດຄຳເຫັນຊ່ວຍກັນ ພັດທະນາຄຸນນະພາບ ສະຖານການສຶກສາ ຂອງຕົນເອງ.*

***ຫຼັກການທີ 7)***

***ການປະກັນຄຸນນະພາບພາຍໃນ ຕ້ອງໄດ້ຮັບການອຳນວຍຄວາມສະດວກ ທາງດ້ານງົບປະມານ, ບຸກຄະລາກອນ ແລະ ຊັບພະຍາກອນດ້ານອື່ນໆ.***

***ຄວາມໝາຍ:***

*ວຽກງານປະກັນຄຸນນະພາບພາຍໃນ ມີຫຼາກຫຼາຍຮູບແບບ, ຂຶ້ນກັບແຕ່ລະ ສະຖານການສຶກສາ ຜັນຂະຫຍາຍ ແລະ ນຳໃຊ້. ແຕ່ຢ່າງໜ້ອຍ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ສາມາດດຳເນີນການໄປໄດ້ ກໍ່ຕ້ອງໄດ້ຈັດສັນ ງົບປະມານ ແລະ ບຸກຄະລາກອນ ຢ່າງເໝາະສົມ.*

*ວຽກງານທີ່ກ່າວໃນທີ່ນີ້ ບໍ່ໄດ້ໝາຍເຖິງ ພຽງແຕ່ ວຽກງານຂອງໜ່ວຍປະກັນຄຸນນະພາບພາຍໃນ ເທົ່ານັ້ນ ແຕ່ຍັງໝາຍເຖິງວຽກງານຂອງພາກສ່ວນອື່ນ ທີ່ຜັນຂະຫຍາຍການປະກັນຄຸນນະພາບ ເຂົ້າສູ່ວຽກງານຂອງຕົນ ນຳອີກ.*

***ຫຼັກການທີ 8)***

***ການປະກັນຄຸນນະພາບພາຍໃນ ຕ້ອງຊ່ວຍໃຫ້ວຽກງານຕ່າງໆ ພາຍໃນສະຖານການສຶກສາ ມີຄວາມຮັບປະກັນທາງດ້ານຄຸນນະພາບ.***

***ຄວາມໝາຍ:***

*ມາດຕະຖານ ແລະ ຕົວຊີ້ວັດຄຸນນະພາບ ເປັນທິດທາງລວມ ໃນການພັດທະນາຄຸນນະພາບຂອງສະຖານການສຶກສາ; ແຕ່ຍັງມີລາຍລະອຽດອື່ນໆອີກ ທີ່ຕ້ອງຖືກຈັດຕັ້ງປະຕິບັດ ແລະ ມັນເປັນອິດສະຫຼະທາງດ້ານວິຊາການ ຂອງສະຖານການສຶກສາ ທີ່ສາມາດກຳນົດ ແລະ ດຳເນີນການ.*

*ການປະກັນຄຸນນະພາບພາຍໃນ ຕ້ອງຊ່ວຍໃຫ້ວຽກງານຕ່າງໆ ມີການວາງແຜນ, ການຈັດຕັ້ງປະຕິບັດ ແລະ ຕິດຕາມເປັນປົກກະຕິ, ທົບທວນເປັນໄລຍະ ແລະ ປັບປຸງແກ້ໄຂ ຕາມຮູບແບບຂອງ* ***PDCA.***

***ຫຼັກການທີ 9)***

***ການປະກັນຄຸນນະພາບພາຍໃນ ຕ້ອງເຮັດໃຫ້ສະຖານການສຶກສາ ສາມາດຕິດຕາມ ແລະ ທົບທວນຄຸນນະພາບຂອງຕົນເອງ ໂດຍຈັດຕັ້ງປະຕິບັດ ການປະເມີນຕົນເອງ ຢ່າງເປັນປົກກະຕິ, ນຳໃຊ້ການຜົນປະເມີນຕົນເອງ, ພາຍໃນ ແລະ ພາຍນອກ ເຂົ້າໃນການສ້າງແຜນພັດທະນາ ແລະ ປັບປຸງຄຸນນະພາບ ໄປເລື້ອຍໆ.***

***ຄວາມໝາຍ:***

*ການປະເມີນຕົນເອງ ເປັນການທົບທວນລະບົບຄຸນນະພາບຂອງສະຖານການສຶກສາຢ່າງຮອບດ້ານ ຕາມມາດຕະຖານຄຸນນະພາບ ທີ່ກະຊວງສຶກສາ ແລະ ກິລາກຳນົດ. ສິ່ງສຳຄັນຂອງການປະເມີນຕົນເອງ ບໍ່ແມ່ນຄະແນນ ບໍ່ແມ່ນໜ້າຕາ ແຕ່ເປັນ* ***"ຄວາມສ່ອງໃສ"*** *ຂອງສາຍຕາເວລາເບິ່ງຜ່ານແວ່ນແຍງ ທີ່ເປັນມາດຕະຖານຄຸນນະພາບ; ເຮົາເຫັນຈຸດດີເຮົາເຫັນຂໍ້ຄົງຄ້າງ ທີ່ຕ້ອງປັບປຸງ ແລະ ພັດທະນາຄືແນວໃດ.*

*ເມື່ອເຫັນຈຸດທີ່ຕ້ອງປັບປຸງ ແລະ ພັດທະນາ ກໍ່ເລີ່ມລົງມືເຮັດໂດຍບໍ່ຄອງຄອຍ; ພ້ອມດຽວກັນ ເມື່ອໄດ້ຮັບການປະເມີນຈາກພາກສ່ວນອື່ນ ກໍ່ຕ້ອງເອົາຜົນການປະເມີນນັ້ນ ມາພິຈາລະນາ ປຶກສາຫາລືພາຍໃນສະຖານການສຶກສາ ເພື່ອຈັດຕັ້ງປະຕິບັດ ໃຫ້ເປັນຮູບປະທຳ.*

***ຫຼັກການທີ 10)***

***ການປະກັນຄຸນນະພາບພາຍໃນ ຕ້ອງມີຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບສະຖານການສຶກສາ, ຫຼັກສູດ ແລະ ຜົນສຳເລັດຂອງວຽກງານຕ່າງໆ; ຕ້ອງປັບປຸງ ໃຫ້ທັນສະພາບ ແລະ ກຽມພ້ອມ ໃຫ້ສັງຄົມເຂົ້າເຖິງໄດ້.***

***ຄວາມໝາຍ:***

*ຂໍ້ມູນຂ່າວສານ ເປັນສິ່ງສຳຄັນອັນໜຶ່ງ ທີ່ສະທ້ອນເຖິງຄຸນນະພາບຂອງສະຖານການສຶກສາ; ຕ້ອງໄດ້ສ້າງລະບົບຂໍ້ມູນຂ່າວສານ ພ້ອມທັງສະໜອງໃນຮູບແບບຕ່າງໆ ເຊັ່ນ: ເວັບໄຊ, ແຜ່ນພັບ, ຈົດໝາຍຂ່າວ ແລະ ສື່ໃນຮູບແບບອື່ນໆ ທີ່ສັງຄົມສາມາດເຂົ້າເຖິງໄດ້.*

*ສິ່ງທີ່ກ່າວມານີ້ ຈະກາຍເປັນຂໍ້ມູນຂ່າວສານ ແລະ ຫຼັກຖານອັນສຳຄັນ ເພື່ອເຮັດໃຫ້ຜູ້ມີສ່ວນຮ່ວມ ແລະ ພາກສ່ວນກ່ຽວຂ້ອງ ທັງພາຍໃນ/ພາຍນອກ ມີຄວາມໝັ້ນໃຈ ຕໍ່ລະບົບຄຸນນະພາບຂອງສະຖານການສຶກສາ.*

## 3.3. ໜ່ວຍປະກັນພາຍໃນ (QAU)

(76) ສະຖານການສຶກສາ ຕ້ອງສ້າງຕັ້ງ "ໜ່ວຍປະກັນຄຸນນະພາບພາຍໃນ" (Quality Assurance Unit - QAU) ໃດໜຶ່ງຂຶ້ນ ໃຫ້ຮັບຜິດຊອບ ວຽກງານປະກັນຄຸນນະພາບພາຍໃນ ໂດຍສະເພາະ ດັ່ງທີ່ໄດ້ກ່າວໄວ້ ໃນ ຫຼັກການທີ5, ໃຫ້ມີ ທີ່ຕັ້ງຂຶ້ນກັບຄະນະບໍລິຫານໂດຍກົງ. ສ່ວນປະເພດ, ຊື່ ແລະ ບຸກຄະລາກອນ ໃຫ້ອີງຕາມຄວາມເໝາະສົມ ແລະ ເງື່ອນໄຂຕົວຈິງ ຂອງ ສະຖານການສຶກສາ.

(77) ໜ່ວຍປະກັນພາຍໃນ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ ສະຖານການສຶກສາ ຕໍ່ກັບວຽກງານປະກັນຄຸນນະພາບການສຶກສາ ແລະ ມີໜ້າທີ່ພື້ນຖານ ດັ່ງຕໍ່ໄປນີ້:

| *ລດ.* | *ໜ້າທີ່* | *ຄວາມຖີ່ຂອງວຽກ* |
|---|---|---|
| *1)* | *ສົມທົບ ກັບທຸກພາກສ່ວນພາຍໃນສະຖານການສຶກສາ ເພື່ອພັນຂະຫຍາຍ ມາດຕະຖານຄຸນນະພາບ ແລະ ວາງແຜນຈັດຕັ້ງປະຕິບັດ ວຽກງານປະກັນຄຸນນະພາບພາຍໃນ.* ***(ກຳນົດອອກເປັນ ແຜນການ/ແຜນງານ ເປັນອັນລວມຂອງທັງໝົດສະຖານການສຶກສາ ແລະ ທັງເປັນອັນສະເພາະຂອງແຕ່ລະພາກສ່ວນ)*** | *ກຳນົດໃນເບື້ອງຕົ້ນ ແລະ ທົບທວນເປັນໄລຍະ* |
| *2)* | *ເຜີຍແຜ່ ແຜນການ/ແຜນງານຂອງວຽກງານປະກັນຄຸນນະພາບ (ທັງອັນລວມ ແລະ ສະເພາະ) ໃຫ້ແກ່ພະນັກງານ, ຄູອາຈານ, ນັກສຶກສາ ແລະ ພາກສ່ວນກ່ຽວຂ້ອງ.* | *ຈັດຕັ້ງເປັນປົກກະຕິ ແລະ ຈັດພິເສດໃຫ້ ສະມາຊິກ ທີ່ເຂົ້າມາໃໝ່* |
| *3)* | *ເກັບກຳບັນດາຂໍ້ມູນ, ຂ່າວສານ, ເອກະສານ ແລະ ຫຼັກຖານຕ່າງໆ ທີ່ຢັ້ງຢືນເຖິງການຈັດຕັ້ງປະຕິບັດວຽກງານປະກັນຄຸນນະພາບພາຍໃນ, ພ້ອມທັງສັງລວມເຂົ້າຖານຂໍ້ມູນຂອງແຕ່ລະມາດຕະຖານ/ຕົວຊີ້ວັດ ເພື່ອເກັບຮັກສາ.* | *ພັດທະນາໃຫ້ເປັນກົນໄກ ດຳເນີນການເປັນປະຈຳ* |

| | | |
|---|---|---|
| 4) | ສະເໜີແຕ່ງຕັ້ງ ຄະນະກຳມະການປະເມີນຕົນເອງ (Self-Assessment Committee - SAC) ພ້ອມທັງຈັດຕັ້ງການຝຶກອົບຮົມວິທີການ ແລະ ແຜນການ ໃນການປະເມີນຕົນເອງໃຫ້ແກ່ SAC. | ຕົ້ນສົກຮຽນ ຂອງປີທີ່ມີແຜນຈັດຕັ້ງການປະເມີນຕົນເອງ |
| 5) | ປະສານສົມທົບກັບSAC ເພື່ອຈັດຕັ້ງການປະເມີນຕົນເອງ ໂດຍໃຫ້ມີການລົງສຳພາດຜູ້ຮຽນ, ພະນັກງານ-ຄູອາຈານ, ຜູ້ປະກອບການ ແລະ ຜູ້ຮຽນຈົບ. ພ້ອມທັງ ລົງສັງເກດ ສະຖານທີ່ຈັດຕັ້ງການຮຽນການສອນ, ສະຖານທີ່ປະຕິບັດຕົວຈິງ ແລະ ສະຖານທີ່ຝຶກງານ. | ສຳລັບປີທີ່ມີ ແຜນຈັດຕັ້ງ ການປະເມີນຕົນເອງ ແລະ ດຳເນີນການ ປະມານ 1-2 ອາທິດ |
| 6) | ສັງລວມບົດລາຍງານການປະເມີນຕົນເອງ (Self-Assessment Report - SAR) | ດຳເນີນການປະມານ 4-8 ອາທິດ |
| 7) | ລາຍງານ SAR ໃຫ້ແກ່ສູນປະກັນຄຸນນະພາບການສຶກສາ ແລະ ພາກສ່ວນກ່ຽວຂ້ອງ ເຊັ່ນ: ກົມອາຊີວະສຶກສາ, ກົມການສຶກສາຊັ້ນສູງ ແລະ ອື່ນໆ | ພາຍຫຼັງສຳເລັດ SAR |
| 8) | ກະກຽມຮັບການປະເມີນພາຍນອກ, ຕາມແຜນຂອງສູນປະກັນຄຸນນະພາບ ຫຼື ຕາມການສະເໜີຂອງສະຖານການສຶກສາ | ຢ່າງໜ້ອຍ 1ຄັ້ງ / 3-5ປີ |
| 9) | ເຜີຍແຜ່ ຂໍ້ມູນຂ່າວສານ ແລະ ຜົນໄດ້ຮັບຂອງວຽກງານປະກັນຄຸນນະພາບ ໃຫ້ພາກສ່ວນກ່ຽວຂ້ອງໄດ້ຮັບຮູ້ | ດຳເນີນການເປັນປົກກະຕິ |

## 3.4. ຄະນະກຳມະການປະເມີນຕົນເອງ (SAC)

(78) SAC ເປັນຄະນະກຳມະການສະເພາະກິດ ແຕ່ງຕັ້ງຂຶ້ນໂດຍຜູ້ອຳນວຍການຂອງສະຖານການສຶກສາ ເພື່ອຈັດຕັ້ງການປະເມີນຕົນເອງ; ການແຕ່ງຕັ້ງໃຫ້ດຳເນີນຕົ້ນສົກຮຽນ ທີ່ມີແຜນດຳເນີນການປະເມີນຕົນເອງ.

(79) SAC ຄວນຈະປະກອບຈາກພາກສ່ວນຕ່າງໆ ພາຍໃນສະຖານການສຶກສາ; ໂດຍຄັດເລືອກເອົາຜູ້ທີ່ໄດ້ຮັບຄວາມໄວ້ເນື້ອເຊື່ອໃຈຈາກມະຫາຊົນ ແລະ ຄຳນຶງເຖິງບົດບາດຍິງຊາຍ; ບຸກຄະລາກອນທັງໝົດ (ບໍ່ນັບກອງເລຂາ) ປະມານ 7-11ທ່ານ ແລະ ຄວນເປັນຈຳນວນຄີກ; ດັ່ງຕົວຢ່າງຕໍ່ໄປນີ້:

| *ລດ.* | *ບຸກຄະລາກອນ ຫຼື ພາກສ່ວນ* | *ບົດບາດໃນ SAC* |
|---|---|---|
| *1)* | *ຜູ້ອຳນວຍການ ຫຼື ຮອງຜູ້ອຳນວຍການ* | *ຫົວໜ້າຄະນະ* |
| *2)* | *ຫົວໜ້າ ໜ່ວຍປະກັນພາຍໃນ (QAU)* | *ຮອງຫົວໜ້າຄະນະ* |
| *3)* | *ຄະນະພະແນກ/ພາກວິຊາ (2-3 ທ່ານ)* | *ກຳມະການ* |
| *4)* | *ຕາງໜ້າອົງການຈັດຕັ້ງມະຫາຊົນ (1-2 ທ່ານ)* | *ກຳມະການ* |
| *5)* | *ຕາງໜ້າຄູອາຈານ (1-2 ທ່ານ)* | *ກຳມະການ* |
| *6)* | *ຕາງໜ້າຜູ້ຮຽນ (1-2 ທ່ານ)* | *ກຳມະການ* |
| *7)* | *ສະມາຊິກຂອງໜ່ວຍປະກັນພາຍໃນ (QAU)* | *ກອງເລຂາ* |

(80) ສະຖານການສຶກສາ ສາມາດເຊື້ອເຊີນ ຜູ້ຊົງຄຸນວຸດທິ ຈາກພາຍນອກ ຫຼື ຈາກສະຖານປະກອບການ ມາເປັນຫົວໜ້າຄະນະ ຫຼື ກຳມະການຂອງ SAC ໄດ້ຕາມຄວາມເໝາະສົມ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງ.

(81) SAC ມີພາລະບົດບາດ ແລະ ໜ້າທີ່ ດັ່ງລຸ່ມນີ້:

| ລດ. | ໜ້າທີ່ | ຄວາມຖີ່ຂອງວຽກ |
|---|---|---|
| 1) | ສົມທົບກັບໜ່ວຍປະກັນພາຍໃນ ວາງແຜນການ ແລະ ກຳນົດໄລຍະເວລາ ເພື່ອດຳເນີນການປະເມີນຕົນເອງ | ຕົ້ນສົກຮຽນ; ທັນທີພາຍຫຼັງໄດ້ຮັບການແຕ່ງຕັ້ງ |
| 2) | (SAC) ຮັບການຝຶກອົບຮົມວຽກງານປະກັນຄຸນນະພາບ (ອາດຈະແມ່ນ ໜ່ວຍປະກັນພາຍໃນ ດຳເນີນການເອງ ຫຼື ເຊີນຄູຝຶກຈາກພາກສ່ວນອື່ນ) | ເຮັດພ້ອມ ຂໍ້1) |
| 3) | ຈັດແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະສະມາຊິກຂອງ SAC | ເຮັດພ້ອມ ຂໍ້1) |
| 4) | ແຕ່ລະສະມາຊິກ ສຶກສາມາດຕະຖານ ແລະ ຕົວຊີ້ວັດຂອງຕົນ | 3-4 ເດືອນ |
| 5) | ເກັບກຳຂໍ້ມູນ-ຫຼັກຖານ ໂດຍອີງຕາມຕົວຊີ້ວັດ ອີງຕາມມາດຕະຖານ (ໂດຍພື້ນຖານ); ວຽກງານຂອງສະຖານການສຶກສາ ທຽບກັບມາດຕະຖານເປັນແນວໃດ?<br>ມີຈຸດດີ ແລະ ຂໍ້ຄົງຄ້າງ ຄືແນວໃດ? | ເຮັດພ້ອມ ຂໍ້4) |
| 6) | ຈັດຕັ້ງຂະບວນການປະເມີນຕົນເອງ (ລົງປະເມີນຕົວຈິງ) | 1-2 ອາທິດ |
| 7) | ຈັດຕັ້ງກອງປະຊຸມ ວິເຄາະຜົນການປະເມີນ ຫຼື ສະວັອດ (SWOT) | ເຮັດພ້ອມ ຂໍ້6) |
| 8) | ວາງແຜນພັດທະນາ ແລະ ປັບປຸງຄຸນນະພາບ | ເຮັດພ້ອມ ຂໍ້6) |
| 9) | ສະຫຼຸບ ແລະ ສັງລວມ ເປັນບົດລາຍງານການປະເມີນຕົນເອງ | 3-4 ອາທິດ |

# 3.5. ຂະບວນການປະເມີນຕົນເອງ

(82) ການປະເມີນຕົນເອງ ແມ່ນ ພັນທະຂອງສະຖານການສຶກສາ ດັ່ງທີ່ໄດ້ກຳນົດໃນ ມາດຕາ59 *"ການປະເມີນ (ຜົນ) ຕົນເອງ"* ກົດໝາຍວ່າດ້ວຍອາຊີວະສຶກສາ ມາດຕາ28 *"ຄວາມຮັບຜິດຊອບຂອງສະຖານການສຶກສາຊັ້ນສູງ ກ່ຽວກັບ ການປະກັນຄຸນນະພາບ"* ດຳລັດວ່າດ້ວຍ ການສຶກສາຊັ້ນສູງ. ນອກນັ້ນ, ມັນຍັງເປັນໜ້າທີ່ອັນສຳຄັນຂອງ SAC ນັບຕັ້ງແຕ່ ຂໍ້6-8 ຂອງຕາຕະລາງຂ້າງເທິງ.

(83) ການປະເມີນຕົນເອງ ຕ້ອງຈັດຕັ້ງໃນລັກສະນະເຊັ່ນດຽວກັນກັບ ການລົງປະເມີນ ຂອງຄະນະປະເມີນພາຍນອກ, ຜູ້ອຳນວຍການ/ຄະນະບໍດີຂອງສະຖານການສຶກສາ ຕ້ອງອອກແຈ້ງການໃຫ້ທຸກພາກສ່ວນ ພາຍໃນສະຖານການສຶກສາຮັບຊາບ ເພື່ອ ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຢ່າງກົງໄປກົງມາ.

(84) ຕາຕະລາງວຽກງານ ຂອງຂະບວນການປະເມີນຕົນເອງ ສາມາດດຳເນີນ ດັ່ງຕໍ່ໄປນີ້:

| *ລດ.* | *ວາລະ ການດຳເນີນການ* | *ໄລຍະເວລາ* |
|---|---|---|
| *1)* | *ຄະນະນຳຂອງສະຖານການສຶກສາ ຈັດກອງປະຊຸມເຕົ້າໂຮມພະນັກງານ, ຄູອາຈານ ແລະ ນັກສຶກສາ ເພື່ອ 1) ສະເໜີຄວາມເປັນມາ ຂອງສະຖານການສຶກສາ, 2) ສະເໜີ ວິໄສທັດ, ພາລະກິດ ແລະ ແຜນການຕ່າງໆ, 3) ເຜີຍແຜ່ວຽກງານປະກັນຄຸນນະພາບ, 4) ປະກາດແຈ້ງການກ່ຽວກັບ ຂະບວນການປະເມີນຕົນເອງ ແລະ ອື່ນໆ ຕາມຄວາມເໝາະສົມ* | *½ ວັນ* |
| *2)* | *ດຳເນີນການສຳພາດ ຄະນະນຳ, ຫົວໜ້າພາກສ່ວນຕ່າງໆ (ລົງສຳພາດຢູ່ຫ້ອງການ ຂອງແຕ່ລະພາກສ່ວນ ແລະ ສັງເກດ ວຽກງານຕົວຈິງ)* | *½ ວັນ* |

| | | |
|---|---|---|
| 3) | ດຳເນີນການສຳພາດ ພະນັກງານ, ຄູອາຈານ (ສົນທະນາເປັນກຸ່ມ, ກຸ່ມລະ 5-6ຄົນ, ອາດຈະຈັດເປັນ 4-5ກຸ່ມ ຕາມຄວາມເໝາະສົມ ແລະ ຂະໜາດຂອງສະຖານການສຶກສາ) | 1 ວັນ |
| 4) | ດຳເນີນການສຳພາດ ຜູ້ຮຽນ (ສົນທະນາເປັນກຸ່ມ 10-20ຄົນ, ອາດຈະຈັດເປັນ 4-5ກຸ່ມ ຕາມຄວາມເໝາະສົມ ແລະ ຂະໜາດຂອງສະຖານການສຶກສາ; ແຕ່ຕ້ອງຮັບປະກັນ ຄວາມຫຼາກຫຼາຍຂອງຊັ້ນຮຽນ ແລະ ສາຂາຮຽນ) | 1 ວັນ |
| 5) | ອອກໄປສຳພາດ ບັນດາສະຖານທີ່ຝຶກງານ (4-5ແຫ່ງ) | 1 ວັນ |
| 6) | ອອກໄປສຳພາດ ບັນດາສະຖານປະກອບການ (4-5ແຫ່ງ) | 1 ວັນ |
| 7) | ຄະນະປະເມີນຕົນເອງ ສັງລວມຂໍ້ມູນ ແລະ ຂຽນຜົນປະເມີນ ໃນແຕ່ລະມາດຕະຖານ (ເຮັດຫຍັງແດ່? ເຮັດແນວໃດ? ມີຈຸດດີຄືແນວໃດ? ຍັງມີຂໍ້ຄົງຄ້າງທີ່ຕ້ອງປັບປຸງແກ້ໄຂ ຄືແນວໃດ? ທິດທາງການປັບປຸງ ຫຼື ຂໍ້ສະເໜີ ເປັນແນວໃດ?) | 2-3 ວັນ |
| 8) | ຈັດຕັ້ງກອງປະຊຸມ ວິເຄາະຜົນການປະເມີນ ຫຼື ສະວັອດ (SWOT) | ½ ວັນ |
| 9) | ວາງແຜນພັດທະນາ ແລະ ປັບປຸງຄຸນນະພາບ | ½ ວັນ |

## 3.6. ບາງຫຼັກການ ໃນການສຳພາດ

(85) ຜູ້ປະເມີນຄວນປະຕິບັດຕົວ ເປັນເພື່ອນມິດ ກັບຜູ້ໃຫ້ສຳພາດ; ບໍ່ສວຍໃຊ້ ການປະເມີນ ຫຼື ການສຳພາດ ເປັນເຄື່ອງມືເອົາຄວາມຜິດກັບບຸກຄົນ; ແຕ່ຊ່ວຍສະຖານການສຶກສາ ຊອກຄົ້ນ ແລະ ກຳນົດຈຸດດີ/ຂໍ້ຄົງຄ້າງ ພ້ອມທັງແນະນຳແນວທາງພັດທະນາ ແລະ ປັບປຸງ ຄຸນນະພາບການສຶກສາ.

(86) ຜູ້ປະເມີນບໍ່ຄວນສະແດງທັດສະນະສ່ວນຕົວ ທັງເປັນການສະໜັບສະໜູນ ຫຼື ປະຕິເສດ ຕໍ່ການດຳເນີນງານໃດໆ ຂອງສະຖານການສຶກສາ. ຢຶດຖືຂໍ້ມູນຫຼັກຖານເປັນບ່ອນອີງ ມີລັກສະນະພາວະວິໄສ ແລະ ວິຊາການ; ໃຫ້ຂໍ້ແນະນຳ ເປັນລັກສະນະ ກໍ່ສ້າງ ແລະ ສ້າງສັນ.

# ບົດທີ4: ບົດລາຍງານການປະເມີນຕົນເອງ

## 4.1. ພາບລວມຂອງບົດລາຍງານ

(87) ບົດລາຍງານການປະເມີນຕົນເອງ (Self-Assessment Report - SAR) ແມ່ນເອກະສານທີ່ສຳຄັນອັນໜຶ່ງ; ພາຍຫຼັງການຈັດຕັ້ງ ຂະບວນການປະເມີນຕົນເອງແລ້ວ ຕ້ອງຂຽນຜົນໄດ້ຮັບ ເປັນບົດລາຍງານໄວ້. SAR ເປັນເອກະສານພື້ນຖານ ສະໜອງຂໍ້ມູນຕ່າງໆ ໃຫ້ແກ່ຜູ້ປະເມີນພາຍນອກທີ່ລົງມາ ດຳເນີນການປະເມີນຄຸນນະພາບພາຍນອກ ໃຫ້ແກ່ສະຖານການສຶກສາ. ພ້ອມດຽວກັນ, ມັນກໍ່ເປັນເອກະສານ ສຳລັບສະຖານການສຶກສາເອງ ໃນການວາງຍຸດທະສາດ, ວາງແຜນພັດທະນາຄຸນນະພາບ ໃນສົກຕໍ່ມາ.

(88) ຮູບແບບການຂຽນ SAR ຄວນເຮັດເປັນຫຼາຍໆວັກ ແລະ ມີຄວາມຍາວທີ່ເໝາະສົມ. ໃນເວລາຂຽນ SAR ຄວນເອົາໃຈໃສ່ ບັນດາປະເດັນ ດັ່ງຕໍ່ໄປນີ້:

| ລດ. | ສິ່ງທີ່ຄວນເອົາໃຈໃສ່ ເວລາຂຽນ SAR |
|---|---|
| ***1)*** | *ຂຽນເປັນປະໂຫຍກເຕັມ, ເນື້ອໃນຈະແຈ້ງ, ບຸກຄົນພາຍນອກອ່ານ ກໍ່ສາມາດເຂົ້າໃຈສະພາບໄດ້.*<br>*ຜູ້ປະເມີນ ຫຼື ຜູ້ຂຽນ ສາມາດນຳໃຊ້ແນວຄວາມຄິດ 5W2H ເພື່ອຕັ້ງຄຳຖາມໃນແຕ່ລະປະເດັນ.*<br>*(5W2H – Who, What, When, Where, Why, How, How much / How many)* |
| ***2)*** | *ວິເຄາະສະພາບການຕົວຈິງຂອງການຈັດຕັ້ງປະຕິບັດວຽກງານ, ອະທິບາຍໃຫ້ເຫັນເຖິງ ຄວາມສອດຄ່ອງ ແລະ ຄວາມແທດເໝາະ ໃນແຕ່ລະມາດຕະຖານ ຄືແນວໃດ? ມີຈຸດດີ ແລະ ຂໍ້ຄົງຄ້າງ ຄືແນວໃດ?* |

*ມີຂໍ້ມູນຫຼັກຖານຄືແນວໃດ? (ຕ້ອງອີງໃສ່ຄວາມເປັນຈິງ, ເນັ້ນໜັກຄວາມເປັນພາວະວິໄສ ແລະ ບໍ່ມີອັກຄະຕິ ຕໍ່ວຽກງານ, ພາກສ່ວນ ຫຼື ບຸກຄົນ)*

**3)** *SAR ບໍ່ແມ່ນແບບສອບຖາມ ທີ່ຕ້ອງຕອບໃຫ້ຄົບທຸກໆຫົວຂໍ້. ໝາຍຄວາມວ່າ ຕ້ອງອີງໃສ່ຄວາມເປັນຈິງ ທີ່ສະຖານການສຶກສາ ໄດ້ຈັດຕັ້ງປະຕິບັດ, ທຸກໆຢ່າງທີ່ຂຽນລົງໄປ ຕ້ອງມີຂໍ້ມູນຫຼັກຖານ; ບໍ່ໃຫ້ຂຽນໃນລັກສະນະທີ່ວ່າ "ມີ" ຫຼື "ບໍ່ມີ".*

**4)** *ຄຳຖາມພິຈາລະນາ ໃນແຕ່ລະມາດຕະຖານ ເປັນບ່ອນອີງ ເປັນແນວທາງໃຫ້ຜູ້ປະເມີນ ຫຼື ຜູ້ຂຽນ; ແຕ່ບໍ່ໝາຍຄວາມວ່າ ຕ້ອງຂຽນຄຳຕອບຂອງແຕ່ລະຄຳຖາມ; ຕ້ອງຂຽນໃຫ້ເປັນເລື່ອງເປັນລາວ ມີທີ່ມາທີ່ໄປ ແລະ ຕໍ່ເນື່ອງກັນ ຢ່າງມີຕັກກະ.*

**5)** *SAR ຕ້ອງໄດ້ຜ່ານການຮັບຮອງ ໂດຍຜູ້ມີສ່ວນຮ່ວມພາຍໃນສະຖານການສຶກສາ, ລົງລາຍເຊັນຢັ້ງຢືນໂດຍຜູ້ອຳນວຍການ/ຄະນະບໍດີ ແລະ ປະທັບຕາ ໃຫ້ເປັນເອກະສານທາງການ.*

## 4.2. ໂຄງຮ່າງຂອງບົດລາຍງານການປະເມີນຕົນເອງ

(89) SAR ຕ້ອງປະກອບດ້ວຍ ໜ້າປົກ, ຄຳນຳ, ສາລະບານ, ເນື້ອໃນ ແລະ ອື່ນໆ ຕາມຄວາມເໝາະສົມ ແລະ ຫົວຄິດປະດິດສ້າງຂອງສະຖານການສຶກສາ; ເນື້ອໃນ ຄວນມີສ່ວນປະກອບຂອງສ່ວນຕ່າງໆ ດັ່ງຕໍ່ໄປນີ້:

| *ລດ.* | *ເນື້ອໃນຂອງ SAR* | *ໝາຍຄົບ* |
|---|---|---|
| *1)* | ***ຄວາມເປັນມາ (1-2 ໜ້າ)*** | |
| | *- ຊື່, ທີ່ຕັ້ງ, ຂອບເຂດ, ພູມສັນຖານ* | ☐ |
| | *- ຂໍ້ມູນຂ່າວສານ ເພື່ອການຕິດຕໍ່* | ☐ |
| | *- ປະຫວັດຄວາມເປັນມາຂອງສະຖານການສຶກສາ* | ☐ |
| | *- ຈຸດພິເສດ ຫຼື ຈຸດເດັ່ນຂອງສະຖານການສຶກສາ* | ☐ |
| *2)* | ***ຂະບວນການປະເມີນຕົນເອງ (1-2 ໜ້າ)*** | |
| | *- ຄະນະປະເມີນຕົນເອງ* | ☐ |
| | *- ໄລຍະເວລາ ດຳເນີນການປະເມີນຕົນເອງ* | ☐ |
| | *- ຂໍ້ສະດວກ/ຂໍ້ຫຍຸ້ງຍາກໃນການປະເມີນຕົນເອງ* | ☐ |
| *3)* | ***ບົດສັງລວມ (2 ໜ້າ)*** | |
| | *- ສັງລວມ ດ້ານດີ ຂອງສະຖານການສຶກສາ* | ☐ |
| | *- ສັງລວມ ຂໍ້ຄົງຄ້າງ ຂອງສະຖານການສຶກສາ* | ☐ |
| | *- ຕາຕະລາງສັງລວມ ຜົນການປະເມີນຕົນເອງ (ເອກະສານຊ້ອນທ້າຍທີ1)* | ☐ |

4) **ຜົນການປະເມີນຕົນເອງ ຕາມມາດຕະຖານ**
**(ປະມານ 30ໜ້າ)**

**ມາດຕະຖານທີ1 - ວິໄສທັດ, ພາລະກິດ ແລະ ຈຸດໝາຍ**

- ອະທິບາຍ ການຈັດຕັ້ງປະຕິບັດ (ຕາມຕົວຊີ້ວັດ ແລະ ຄຳຖາມພິຈາລະນາ) ☐
- ສັງລວມຈຸດດີ ☐
- ສັງລວມຂໍ້ຄົງຄ້າງ ແລະ ສາເຫດ ☐
- ຂໍ້ແນະນຳ ຫຼື ທິດທາງ ໃນການປັບປຸງ ☐

**ມາດຕະຖານທີ2 - ການຄຸ້ມຄອງ**

- ອະທິບາຍ ການຈັດຕັ້ງປະຕິບັດ (ຕາມຕົວຊີ້ວັດ ແລະ ຄຳຖາມພິຈາລະນາ) ☐
- ໂຄງຮ່າງການຈັດຕັ້ງ ☐
- ສັງລວມຈຸດດີ ☐
- ສັງລວມຂໍ້ຄົງຄ້າງ ແລະ ສາເຫດ ☐
- ຂໍ້ແນະນຳ ຫຼື ທິດທາງ ໃນການປັບປຸງ ☐

........
........
........
........
........
........
........

| | | |
|---|---|---|
| | **ມາດຕະຖານທີ10 - ການຄົ້ນຄວ້າ ແລະ ບໍລິການສັງຄົມ** | |
| | - ອະທິບາຍ ການຈັດຕັ້ງປະຕິບັດ (ຕາມຕົວຊີ້ວັດ ແລະ ຄຳຖາມພິຈາລະນາ) | ☐ |
| | - ສັງລວມຈຸດດີ | ☐ |
| | - ສັງລວມຂໍ້ຄົງຄ້າງ ແລະ ສາເຫດ | ☐ |
| | - ຂໍ້ແນະນຳ ຫຼື ທິດທາງ ໃນການປັບປຸງ | ☐ |
| 5) | **ການວິເຄາະຜົນປະເມີນ ແລະ ແຜນພັດທະນາ** | |
| | - ການວິເຄາະ (ນຳໃຊ້ SWOT - ເອກະສານຊ້ອນທ້າຍທີ2) | ☐ |
| | - ແຜນພັດທະນາຄຸນນະພາບ | ☐ |
| 6) | **ເອກະສານຊ້ອນທ້າຍ** | |
| | - ເອກະສານຊ້ອນທ້າຍທີ1 | ☐ |
| | - ເອກະສານຊ້ອນທ້າຍທີ2 | ☐ |
| | ........<br>........<br>........ | |

# ເອກະສານຊ້ອນທ້າຍ

1. ຕາຕະລາງສັງລວມ ຜົນການປະເມີນຕົນເອງ

| ລດ | ມາດຕະຖານ | ຜົນການປະເມີນ | | | | |
|---|---|---|---|---|---|---|
| | | 1 | 2 | 3 | 4 | 5 |
| 1. | ວິໄສທັດ, ພາລະກິດ ແລະ ຈຸດໝາຍ | | | | | |
| 2. | ການຄຸ້ມຄອງ | | | | | |
| 3. | ບຸກຄະລາກອນ | | | | | |
| 4. | ຫຼັກສູດ | | | | | |
| 5. | ປະສິດທິຜົນຂອງການຮຽນ-ການສອນ | | | | | |
| 6. | ການສົ່ງເສີມຜູ້ຮຽນ | | | | | |
| 7. | ສະພາບແວດລ້ອມ ແລະ ແຫຼ່ງຮຽນຮູ້ | | | | | |
| 8. | ລະບົບຂໍ້ມູນຂ່າວສານ | | | | | |
| 9. | ລະບົບປະກັນຄຸນນະພາບ | | | | | |
| 10. | ການຄົ້ນຄວ້າ ແລະ ການບໍລິການສັງຄົມ | | | | | |
| | **ຕີລາຄາ ລະດັບຄຸນນະພາບໂດຍລວມ (ເປັນເລກຖ້ວນ 1-5)** | | | | | |

2. ຕາຕະລາງສັງລວມ ຜົນການວິເຄາະ SWOT

| ປັດໄຈ ພາຍໃນ (Internal) / ປັດໄຈ ພາຍນອກ (External) | ຈຸດແຂງ (Strenghts)<br>1. …………<br>2. …………<br>3. ………… | ຈຸດອ່ອນ (Weakness)<br>1. …………<br>2. …………<br>3. ………… |
|---|---|---|
| ໂອກາດ (Oppotunities)<br>1. …………<br>2. …………<br>3. ………… | **SO**<br>ແຜນການບຸກ? | **WO**<br>ແຜນການແກ້ໄຂ? |
| ອຸປະສັກ (Threates)<br>1. …………<br>2. …………<br>3. ………… | **ST**<br>ແຜນການປ້ອງກັນ? | **WT**<br>ແຜນການຮັບມື? |